ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ 141 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 6 ສິງຫາ 2025

ລັດຖະດຳລັດ

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປຸກຝັງ

- ອີງຕາມ ມາດຕາ 68 ຂໍ້ 1 ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 77/ສພຊ, ລົງວັນທີ 20 ເດືອນມີນາ ປີ 2025;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປຸກຝັງ ສະບັບເລກທີ 160/ສພຊ, ລົງວັນທີ 25 ມິຖຸນາ 2025;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 38/ຄປຈ, ລົງວັນທີ 23 ກໍລະກົດ 2025.

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍການປຸກຝັງ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 160 / ສພຊ
ນະຄອນຫຼວງວຽງຈັນ, ວັນທີ 25 / 06 / 25

ມະຕິ
ກອງປະຊຸມສະພາແຫ່ງຊາດ
ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປຸກຝັງ

- ອີງຕາມລັດຖະທຳມະນຸນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 77/ສພຊ, ລົງວັນທີ 20 ເດືອນມິນາ ປີ 2025 ມາດຕາ 54 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 56/ສພຊ, ລົງວັນທີ 28 ມິຖຸນາ 2024 ມາດຕາ 11 ຂໍ້ 1.

ພາຍຫຼັງກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປຸກຝັງ ໃນວາລະຂອງກອງປະຊຸມ ຄັ້ງວັນທີ 19 ມິຖຸນາ 2025 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 25 ມິຖຸນາ 2025.

ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປຸກຝັງ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 84 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 25 ມິຖຸນາ 2025

ກົດໝາຍ
ວ່າດ້ວຍການປຸກຝັງ

ພາກທີ I
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານປຸກຝັງ ເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດຢ່າງມີ ປະສິດທິພາບ ແລະ ປະສິດທິຜົນ ແນໃສ່ ນຳໃຊ້, ປົກປັກຮັກສາ, ພັດທະນາ ທີ່ດິນກະສິກຳ ຮັບປະກັນຄວາມໝັ້ນຄົງທາງດ້ານ ສະບຽງອາຫານ, ໂພຊະນາການ ແລະ ການຜະລິດເປັນສິນຄ້າ ຕິດພັນກັບການຫັນເປັນອຸດສາຫະກຳທີ່ທັນສະໄໝ ຕາມທິດ ສີຂຽວ, ສະອາດ ແລະ ຍືນຍົງ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າໃຫ້ດີຂຶ້ນ, ສາມາດ ເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

ມາດຕາ 2 ການປຸກຝັງ

ການປຸກຝັງ ແມ່ນ ຂະບວນການປຸກພືດ ທີ່ນຳໃຊ້ປັດໄຈການຜະລິດ ເປັນຕົ້ນ ທີ່ດິນ, ນ້ຳ, ແນວພັນພືດ, ຝຸ່ນ, ຢາປາບສັດຕູພືດ, ແຮງງານ, ເຄື່ອງມືການຜະລິດ, ກົນຈັກການຜະລິດ, ວິທະຍາສາດ, ເຕັກໂນໂລຊີ ເພື່ອເຮັດໃຫ້ຜົນຜະລິດ ໄດ້ທັງປະລິມານ ແລະ ຄຸນນະພາບ ສາມາດສະໜອງ ສະບຽງອາຫານຢ່າງພຽງພໍໃຫ້ແກ່ ສັງຄົມ ແລະ ວັດຖຸດິບໃຫ້ແກ່ໂຮງງານອຸດສາຫະກຳປຸງແຕ່ງເປັນສິນຄ້າ ຮັບໃຊ້ພາຍໃນ ແລະ ສົ່ງອອກ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພືດ** ໝາຍເຖິງ ສິ່ງທີ່ມີຊີວິດປະເພດໜຶ່ງຢູ່ໃນກຸ່ມພືດ ເປັນຕົ້ນ ພືດລົ້ມລຸກ ຫຼື ພືດອາຍຸສັ້ນ, ຕົ້ນໄມ້ ໃຫ້ໝາກ ຫຼື ພືດອາຍຸຍາວ, ດອກໄມ້, ໄມ້ປະດັບ, ເຫັດ, ເຟີນ, ແຫ ຊຶ່ງສາມາດພົບເຫັນຢູ່ ເທິງບົກ ແລະ ນ້ຳ;

2. **ພືດລົ້ມລຸກ ຫຼື ພືດອາຍຸສັ້ນ** ໝາຍເຖິງ ພືດທີ່ມີອາຍຸແຕ່ ໜຶ່ງປີ ລົງມາ ເປັນຕົ້ນ ເຂົ້າ, ສາລີ, ມັນຕົ້ນ, ມັນດ້ຳ, ພືດຕະກຸນຖົ່ວ, ໝາກເດືອຍ, ອ້ອຍ, ຝ້າຍ, ໝາກງາ, ພືດຜັກ;

3. **ຕົ້ນໄມ້ໃຫ້ໝາກ ຫຼື ພືດອາຍຸຍາວ** ໝາຍເຖິງ ພືດທີ່ມີອາຍຸຫຼາຍກວ່າ ໜຶ່ງປີ ເປັນຕົ້ນ ຊາ, ຢາງພາລາ, ໝາກມ່ວງ, ໝາກລຳໄຍ, ໝາກນຶ, ໝາກຂາມ, ໝາກກ້ຽງ, ໝາກນາວ, ໝາກລິ້ນຈີ່, ໝາກຖົ່ວລຽນ, ໝາກມັງກອນ, ກາເຟ;

4. **ເມັດພັນພືດ** ໝາຍເຖິງ ເມັດ ຫຼື ສ່ວນໃດສ່ວນໜຶ່ງ ຂອງພືດ ທີ່ໃຊ້ປູກ ຫຼື ຂະຫຍາຍພັນ ເປັນຕົ້ນ ລຳຕົ້ນ, ຕໍ, ໜໍ, ເຫງົ້າ, ງ່າ, ໃບ, ແໜງ, ຕາ, ຮາກ, ຫົວ, ດອກ, ໝາກ ຫຼື ແກ່ນ;

5. **ຝຸ່ນອິງຄະທາດ ຫຼື ຝຸ່ນອິນຊີ** (Organic fertilizer) ໝາຍເຖິງ ຝຸ່ນທີ່ໄດ້ຈາກສິ່ງເສດເຫຼືອຂອງພືດ, ສັດ, ດິນອິນຊີ (Peat ຫຼື Organic soil) ເປັນຕົ້ນ **ສິ່ງເສດເຫຼືອຈາກ** ກະສິກຳ, ມູນສັດລ້ຽງ, ມູນເຈຍ ທີ່ໄດ້ນຳມາຜ່ານຂະບວນການ ບົ່ມ, ໝັກ ຫຼື ວິທີການອື່ນ ຕາມຫຼັກວິຊາການ ລວມທັງຝຸ່ນຊີວະພາບ;

6. **ຝຸ່ນອະນົງຄະທາດ ຫຼື ຝຸ່ນເຄມີ** (Inorganic fertilizer) ໝາຍເຖິງ ຝຸ່ນທີ່ໄດ້ຈາກຂະບວນການສັງເຄາະທາງເຄມີ ທີ່ມີການກຳນົດທາດອາຫານຫຼັກຂອງພືດ ເປັນຕົ້ນ ທາດໄນໂຕຣເຈນ (N), ຟົດສະຟໍຣັສ (P), ໂປຕັດຊຽມ (K);

7. **ຝຸ່ນຊີວະພາບ** (Biofertilizer) ໝາຍເຖິງ ຝຸ່ນອິງຄະທາດປະເພດໜຶ່ງ ທີ່ມີການປະສົມຫົວເຊື້ອຈຸລິນຊີ ຫຼື ແບັກທີເຣຍ ຊະນິດໃດໜຶ່ງ ຫຼື ຫຼາຍຊະນິດ ຕາມຄວາມຕ້ອງການຂອງຜູ້ນຳໃຊ້ ຊຶ່ງມີເປົ້າໝາຍ ສົ່ງເສີມ ຫຼື ກະຕຸ້ນ ການເປັນປະໂຫຍດຂອງຝຸ່ນ ຕໍ່ພືດຫຼາຍຂຶ້ນ ແລະ ປ້ອງກັນການຕິດເຊື້ອຂອງຮາກພືດ;

8. **ຊີວະພາບດ້ານເຊື້ອພັນ** ໝາຍເຖິງ ຈຸລິນຊີທີ່ເປັນປະໂຫຍດຕໍ່ພືດ ໃນການຄັດເລືອກ ແລະ ຂະຫຍາຍແນວພັນພືດ;

9. **ຄຸນລັກສະນະທາງກາຍຍະພາບຂອງດິນ** ໝາຍເຖິງ ລັກສະນະຂອງດິນທີ່ສາມາດ ເບິ່ງເຫັນ ແລະ ສຳຜັດໄດ້ ເປັນຕົ້ນ ເນື້ອດິນ, ໂຄງສ້າງດິນ, ສີດິນ, ຊັ້ນດິນ;

10. **ຄຸນນະພາບຂອງຜົນຜະລິດພືດ** ໝາຍເຖິງ ການກຳນົດ ກ່ຽວກັບ ສີ, ຣົດຊາດ, ຂະໜາດ, ນ້ຳໜັກ ກົງກັບຄຸນລັກສະນະທາງຊີວະເຄມີ ຂອງພືດ ລວມທັງ ການຫຸ້ມຫໍ່, ບັນຈຸ, ສະຫຼາກ ແລະ ການໝາຍ ຢ່າງສອດຄ່ອງກັບມາດຕະຖານ;

11. **ກະສິກຳສະອາດ** ໝາຍເຖິງ ລະບົບ ການຜະລິດກະສິກຳ ແລະ ການເກັບກ່ຽວຜົນຜະລິດຈາກທຳມະຊາດ ທີ່ມີການຢັ້ງຢືນ ຄຸນນະພາບ, ຄວາມສະອາດ, ຄວາມປອດໄພ ແລະ ເປັນມິດກັບສິ່ງແວດລ້ອມ;

12. **ກະສິກຳອັດສະລິຍະ** ໝາຍເຖິງ ການນຳໃຊ້ ເຕັກນິກ, ເຕັກໂນໂລຊີ ທີ່ທັນສະໄໝ ເພື່ອເພີ່ມສະມັດຖະພາບຜົນຜະລິດ ແລະ ຄວາມຍືນຍົງໃນການປູກຝັງ;

13. **ຄວາມປອດໄພຂອງຜົນຜະລິດພືດ** ໝາຍເຖິງ ການຮັບປະກັນຜົນຜະລິດພືດ ບໍ່ໃຫ້ເປັນອັນຕະລາຍ ຕໍ່ຜູ້ບໍລິໂພກໃນເວລາ ຜະລິດ, ປຸງແຕ່ງ, ຈຳໜ່າຍ, ແຈກຢາຍ ຫຼື ບໍລິໂພກ;

14. **ສິ່ງແປກປອມ** ໝາຍເຖິງ ສິ່ງທີ່ບໍ່ຕ້ອງການປະປົນຢູ່ກັບຜະລິດຕະພັນພືດ ຫຼື ບໍລິເວນອ້ອມຮອບ ຂອງຜະລິດຕະພັນພືດ ຊຶ່ງອາດກໍ່ໃຫ້ເກີດຜົນກະທົບຕໍ່ ຄວາມປອດໄພ ຫຼື ຄຸນນະພາບ ຂອງຜົນຜະລິດພືດ ເປັນຕົ້ນ ແກ້ວ, ໂລຫະ, ໄມ້, ກ້ອນຫີນ, ດິນ, ໃບໄມ້, ຜ້າຢາງ ຫຼື ຖົງຢາງ, ແກ່ນຫຍ້າ;

15. **ຊາວກະສິກອນ** ໝາຍເຖິງ ຜູ້ເຮັດການຜະລິດກະສິກຳເປັນອາຊີບ ເຊັ່ນ ການປູກຝັງ, ການລ້ຽງສັດ ແລະ ການປະມົງ;

16. **ຈຸລິນຊີທີ່ເປັນປະໂຫຍດ** ໝາຍເຖິງ ສິ່ງມີຊີວິດຂະໜາດນ້ອຍ ທີ່ບໍ່ສາມາດເບິ່ງເຫັນດ້ວຍຕາເປົ່າໄດ້ ຊຶ່ງໃຊ້ເຂົ້າໃນການຈະເລີນເຕີບໂຕ ແລະ ຂະຫຍາຍພັນພືດ, ການປັບປຸງດິນ ແລະ ເປັນທາດອາຫານທີ່ໃຊ້ທົດແທນຝຸ່ນ.

ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານປູກຝັງ

ລັດ ຊຸກຍູ້ ແລະ ສົ່ງເສີມ ວຽກງານປູກຝັງ ດ້ວຍການວາງ ນະໂຍບາຍ, ກົດໝາຍ, ປະກອບບຸກຄະລາກອນ, ສະໜອງ ງົບປະມານ, ພາຫະນະ, ອັດຕາປະກອນ, ເຕັກນິກວິຊາການ, ວິທະຍາສາດ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ເຂົ້າໃນວຽກງານດັ່ງກ່າວ.

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນການພັດທະນາວຽກງານປູກຝັງ ເພື່ອຮັບປະກັນຄວາມໝັ້ນຄົງທາງດ້ານ ສະບຽງອາຫານ,

ໂພຊະນາການ ແລະ ການຜະລິດເປັນສິນຄ້າ ຕາມກົນໄກເສດຖະກິດຕະຫຼາດ ຕິດພັນກັບການຫັນເປັນອຸດສາຫະກຳທີ່ທັນສະໄໝຕາມທິດ ສີຂຽວ, ສະອາດ ແລະ ຍືນຍົງ.

ລັດ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ ຊາວກະສິກອນ ຈັດຕັ້ງເປັນ ກຸ່ມ, ສະຫະກອນ ແລະ ສະມາຄົມ ເພື່ອເຂົ້າເຖິງ ຂໍ້ມູນ ຂ່າວສານ, ຕະຫຼາດ, ແຫຼ່ງທຶນ, ການສະໜອງບໍລິການດ້ານວິຊາການ ແລະ ໄດ້ຮັບນະໂຍບາຍ ຕາມກົດໝາຍ.

ມາດຕາ 5 ຫຼັກການກ່ຽວກັບວຽກງານປຸກຝັງ

ໃນການເຄື່ອນໄຫວວຽກງານປຸກຝັງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;

2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

3. ຮັບປະກັນ ຜົນປະໂຫຍດຂອງ ລັດ, ລວມໝູ່, ການຈັດຕັ້ງ ແລະ ບຸກຄົນ, ຄວາມປອດໄພ ຕໍ່ ຊີວິດ, ສຸຂະພາບ ຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ;

4. ຮັບປະກັນການນຳໃຊ້ທີ່ດິນກະສິກຳ ຕາມແຜນແມ່ບົດຈັດສັນທີ່ດິນ ເພື່ອຄ້ຳປະກັນຄວາມໝັ້ນຄົງ ທາງດ້ານສະບຽງອາຫານ ແລະ ຜະລິດເປັນສິນຄ້າ;

5. ຮັບປະກັນການນຳໃຊ້ ມາດຕະຖານ ແລະ ເຕັກນິກ ການປຸກຝັງ ຢ່າງຖືກຕ້ອງ, ໂປ່ງໃສ ແລະ ສາມາດກວດສອບໄດ້;

6. ປະສານສົມທົບກັບ ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການ ຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ, ພັດທະນາ ແລະ ສົ່ງເສີມ ທີ່ດິນກະສິກຳ.

ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນ ກັບວຽກງານປຸກຝັງ ຢູ່ ສປປ ລາວ.

ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມ ການພົວພັນ, ຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປຸກຝັງ ດ້ວຍການ ແລກປ່ຽນ ບົດຮຽນ, ວິຊາການ, ຂໍ້ມູນ ຂ່າວສານ, ການຄົ້ນຄວ້າວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ ທີ່ທັນສະໄໝ ເພື່ອພັດທະນາວຽກງານປຸກຝັງໃຫ້ ມີຄຸນນະພາບ, ເຂັ້ມແຂງ ແລະ ທັນສະໄໝ ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

ພາກທີ II
ກິດຈະການ ການປຸກຝັງ
ໝວດທີ 1
ທີ່ດິນປຸກຝັງ

ມາດຕາ 8 ທີ່ດິນປຸກຝັງ

ທີ່ດິນປຸກຝັງ ແມ່ນ ສ່ວນໜຶ່ງຂອງທີ່ດິນກະສິກຳ ທີ່ນຳໃຊ້ ສຳລັບ ການປຸກພືດ ເປັນຕົ້ນ ປຸກເຂົ້າ, ປຸກພືດ ລົ້ມລຸກ ຫຼື ພືດອາຍຸສັ້ນ, ຕົ້ນໄມ້ໃຫ້ໝາກ ຫຼື ພືດອາຍຸຍາວ.

ມາດຕາ 9 ການຄຸ້ມຄອງທີ່ດິນປຸກຝັງ

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຄຸ້ມຄອງທີ່ດິນປຸກຝັງ ໂດຍປະສານສົມທົບກັບ ຂະແໜງການອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງໃນການ ສຳຫຼວດ, ວັດແທກ, ວິເຄາະ, ວິໄຈ, ກຳນົດເຂດຈຸດສຸມ, ຈັດສັນ, ວາງແຜນການນຳໃຊ້, ອອກລະບຽບການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ສົ່ງເສີມ ທີ່ດິນປຸກຝັງ ຢ່າງເປັນລະບົບຕໍ່ເນື່ອງ ເພື່ອຮັບປະກັນຕາມທິດ ສີຂຽວ, ສະອາດ ແລະ ຍືນຍົງ.

ມາດຕາ 10 ການປົກປັກຮັກສາທີ່ດິນປຸກຝັງ

ທີ່ດິນປຸກຝັງ ຕ້ອງໄດ້ຮັບການປົກປັກຮັກສາ ດ້ວຍການ ກຳນົດຂອບເຂດພື້ນທີ່ດິນ ແລະ ສະຫງວນໄວ້ ເພື່ອນຳໃຊ້ເຂົ້າໃນວຽກງານປຸກຝັງ ໃຫ້ມີປະສິດທິຜົນ ແລະ ນຳໃຊ້ຖືກຕ້ອງຕາມເປົ້າໝາຍ ດ້ວຍການວາງ ລະບຽບການ ແລະ ມາດຕະການ ປົກປັກຮັກສາທີ່ດິນດັ່ງກ່າວ ໂດຍສອດຄ່ອງກັບ ແຜນແມ່ບົດຈັດສັນທີ່ດິນ ແຫ່ງຊາດ, ແຜນຍຸດທະສາດການຄຸ້ມຄອງທີ່ດິນກະສິກຳ ແລະ ແຜນການນຳໃຊ້ທີ່ດິນກະສິກຳຂອງຂະແໜງການ ກະສິກຳ ແລະ ສິ່ງແວດລ້ອມ ແລະ ແຜນຈັດສັນທີ່ດິນທ້ອງຖິ່ນ ໃນແຕ່ລະໄລຍະ.

ເຂດການປົກປັກຮັກສາທີ່ດິນປຸກຝັງ ມີ ດັ່ງນີ້:

1. ເຂດມີໂຄງລ່າງຊົນລະປະທານ ຮັບປະກັນ ແລະ ສາມາດຮັບນ້ຳຊົນລະປະທານ ເຮັດການຜະລິດ ໄດ້ທັງ ສອງລະດູ;

2. ເຂດທີ່ດິນມີຄຸນລັກສະນະສະເພາະ ແລະ ເໝາະສົມສຳລັບການປຸກພືດ ຫຼື ຕົ້ນໄມ້ຊະນິດໃດໜຶ່ງ ເປັນຕົ້ນ ເຂດທີ່ເໝາະສົມ ໃນການປຸກ ເຂົ້າໄກ່ນ້ອຍ, ໂສມ, ກາເຟ, ຊາ, ພືດທີ່ເປັນຢາ ທີ່ບໍ່ສາມາດປຸກໄດ້ ໃນເຂດອື່ນ;

3. ເຂດທີ່ດິນ ສຳລັບການຄົ້ນຄວ້າທົດລອງດ້ານການປຸກຝັງ.

ມາດຕາ 11 ການພັດທະນາທີ່ດິນປຸກຝັງ

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການ ໃນການພັດທະນາທີ່ດິນປຸກຝັງ ເພື່ອຍົກສູງ ສະມັດຖະພາບຜົນຜະລິດໃຫ້ສູງຂຶ້ນ ດ້ວຍການວາງ ນະໂຍບາຍ, ວິທີການ ແລະ ມາດຕະການ ກ່ຽວກັບການຮັກສາ ແລະ ປ່ຽນແປງສະພາບດິນ, ປັບປຸງດິນ, ຟື້ນຟູດິນ ໃຫ້ມີຄຸນນະພາບດີ ແລະ ມີມູນຄ່າເພີ່ມຂຶ້ນ ໂດຍ ສອດຄ່ອງກັບ ແຜນແມ່ບົດຈັດສັນທີ່ດິນ, ແຜນຍຸດທະສາດການຄຸ້ມຄອງທີ່ດິນກະສິກຳ ແລະ ປະສານສົມທົບກັບພາກສ່ວນທີ່ ກ່ຽວຂ້ອງ.

ການພັດທະນາທີ່ດິນປຸກຝັງ ມີ ດັ່ງນີ້:

1. ການຟື້ນຟູທີ່ດິນປຸກຝັງ;
2. ການປັບປຸງທີ່ດິນປຸກຝັງ;
3. ການປຸກພືດໝູນວຽນ;
4. ການນຳໃຊ້ຝຸ່ນ;
5. ການສ້າງຕົວແບບພັດທະນາທີ່ດິນກະສິກຳ.

ມາດຕາ 12 ການນຳໃຊ້ທີ່ດິນປຸກຝັງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງນຳໃຊ້ທີ່ດິນປຸກຝັງ ເຂົ້າໃນການຜະລິດ ຢ່າງຖືກຕ້ອງຕາມ ເປົ້າໝາຍ ແລະ ແຜນການນຳໃຊ້ທີ່ດິນກະສິກຳແຕ່ລະຂັ້ນ ໂດຍສອດຄ່ອງກັບ ກົດໝາຍ, ແຜນແມ່ບົດຈັດສັນ ທີ່ດິນ, ແຜນຍຸດທະສາດການຄຸ້ມຄອງທີ່ດິນກະສິກຳ ແລະ ຕາມທ່າແຮງຂອງແຕ່ລະເຂດ, ຄວາມສາມາດ ດ້ານແຮງງານ ແລະ ທຶນ ຂອງແຕ່ລະຄອບຄົວ ໂດຍຖືເອົາການຍົກສູງສະມັດຖະພາບຂອງດິນເປັນຕົ້ນຕໍ ແລະ ຫັນໄປສູ່ການເຮັດກະເສດສຸມເທື່ອລະກ້າວ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳໃຊ້ທີ່ດິນປຸກຝັງ ເຂົ້າໃນເປົ້າໝາຍອື່ນ ຕ້ອງຂໍອະນຸຍາດນຳຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ແລະ ຕ້ອງຮັບປະກັນໃຫ້ມີຜົນກະທົບໜ້ອຍທີ່ສຸດ ຕໍ່ ປະລິມານ, ຄຸນນະພາບ ຂອງດິນ, ຊີວະນານາພັນ ແລະ ສິ່ງແວດລ້ອມ.

ມາດຕາ 13 ການຫັນປ່ຽນທີ່ດິນປຸກຝັງ

ການຫັນປ່ຽນທີ່ດິນປຸກຝັງ ໄປເປັນທີ່ດິນປະເພດອື່ນ ຈະດຳເນີນໄດ້ກໍຕໍ່ເມື່ອເຫັນວ່າ ມີຄວາມຈຳເປັນ ນຳໃຊ້ເຂົ້າໃນເປົ້າໝາຍອື່ນ ເພື່ອຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ໂດຍສອດຄ່ອງກັບ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນແມ່ບົດຈັດສັນ ທີ່ດິນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຫັນປ່ຽນທີ່ດິນປຸກຝັງ ຕ້ອງຍື່ນຄຳຮ້ອງ ຕໍ່ຂະແໜງການ ກະສິກຳ ແລະ ສິ່ງແວດລ້ອມ. ພາຍຫຼັງໄດ້ຮັບການສະເໜີແລ້ວ ຂະແໜງການດັ່ງກ່າວ ຕ້ອງປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ລົງກວດກາ ເກັບກຳຂໍ້ມູນຕອນດິນ ແລະ ເປົ້າໝາຍການຫັນປ່ຽນ ເພື່ອ ຄົ້ນຄວ້າກ່ຽວກັບການຫັນປ່ຽນ ແລະ ສະເໜີຂັ້ນເທິງພິຈາລະນາ.

ການຫັນປ່ຽນທີ່ດິນປຸກຝັງ ໄປເປັນທີ່ດິນປະເພດອື່ນ ໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍອື່ນ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ໝວດທີ 2
ປັດໄຈການຜະລິດ

ມາດຕາ 14 ປັດໄຈການຜະລິດ

ປັດໄຈການຜະລິດ ແມ່ນ ສິ່ງທີ່ຈຳເປັນ ທີ່ນຳໃຊ້ເຂົ້າໃນການປຸກຝັງ ຊຶ່ງປະກອບດ້ວຍ:

1. ທີ່ດິນ;
2. ນ້ຳ;
3. ແນວພັນພືດ;
4. ຝຸ່ນ;
5. ຢາປາບສັດຕູພືດ;
6. ແຮງງານ;
7. ເຄື່ອງມືການຜະລິດ;
8. ກົນຈັກການຜະລິດ;
9. ປັດໄຈການຜະລິດອື່ນ.

ນອກຈາກນີ້ ຍັງມີປັດໄຈສຳຮອງ ທີ່ນຳໃຊ້ເຂົ້າໃນການປຸກຝັງ ເປັນຕົ້ນ ທາດອາຫານເສີມພືດ, ວັດສະດຸ ປຸກພືດ, ສິ່ງມີຊີວິດທີ່ເປັນປະໂຫຍດ.

ມາດຕາ 15 ທີ່ດິນ

ທີ່ດິນ ແມ່ນ ທີ່ດິນກະສິກຳທີ່ນຳໃຊ້ເຂົ້າໃນການປຸກຝັງ ຊຶ່ງມີລະບົບນິເວດວິທະຍາ, ມີທັງສິ່ງ ມີຊີວິດ, ບໍ່ມີຊີວິດ ແລະ ແຮ່ທາດຕ່າງໆ ຊຶ່ງພື້ນທີ່ດັ່ງກ່າວ ຕ້ອງບໍ່ມີຄວາມສ່ຽງຕໍ່ການປົນເປື້ອນສານເຄມີ, ທາດໂລຫະໜັກ ແລະ ເຊື້ອຈຸລິນຊີອັນຕະລາຍ.

ມາດຕາ 16 ນ້ຳ

ນ້ຳ ແມ່ນ ນ້ຳທີ່ນຳໃຊ້ເຂົ້າໃນການປູກຝັງ ຊຶ່ງໄດ້ມາຈາກ ຊັ້ນໜ້າດິນ ຫຼື ຊັ້ນໃຕ້ດິນ ເຊັ່ນ ແມ່ນ້ຳ, ລຳເຊ, ຫ້ວຍ, ຮ່ອງ, ໜອງ, ຄອງ, ບຶງ, ນ້ຳສ້າງ, ນ້ຳບາດານ, ອ່າງເກັບນ້ຳ ແລະ ອື່ນໆ ໃຫ້ພຽງພໍຕໍ່ການຈະເລີນເຕີບໂຕ ຂອງພືດ.

ການນຳໃຊ້ນ້ຳ ເຂົ້າໃນການປູກຝັງ ຕ້ອງຮັບປະກັນໃຫ້ ມີຄວາມສະອາດ, ປອດໄພ, ນຳໃຊ້ຢ່າງປະຢັດ, ມີປະສິດທິພາບ, ປົກປັກຮັກສາ ນ້ຳ ແລະ ຊັບພະຍາກອນນ້ຳ ຕາມທິດສີຂຽວ, ສະອາດ ແລະ ຍືນຍົງ ຖືກຕ້ອງ ແລະ ສອດຄ່ອງກັບ ກົດໝາຍວ່າດ້ວຍຊົນລະປະທານ, ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ໃນກໍລະນີນ້ຳ ຫາກມີຄວາມສ່ຽງຕໍ່ການປົນເປື້ອນ ຕ້ອງມີການຈັດການ ແລະ ບຳບັດ ກ່ອນການນຳໃຊ້.

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ປະສານສົມທົບກັບ ຂະແໜງການອື່ນ, ອົງການປົກຄອງ ທ້ອງຖິ່ນ ໃນການເກັບກຳຂໍ້ມູນ ການນຳໃຊ້ ນ້ຳໜ້າດິນ ແລະ ນ້ຳໃຕ້ດິນ ເຂົ້າໃນການປູກຝັງ ເພື່ອປະເມີນ ປະລິມານ ແລະ ຄຸນນະພາບ ການນຳໃຊ້ ແລະ ຕອບສະໜອງຄວາມຕ້ອງການໃນການຜະລິດໃຫ້ພຽງພໍ.

ມາດຕາ 17 ແນວພັນພືດ

ແນວພັນພືດ ແມ່ນ ເມັດພັນພືດ ຫຼື ສ່ວນຂະຫຍາຍພັນພືດ ຂອງກຸ່ມພືດ ທີ່ມີກຳມະພັນ, ລັກສະນະ ທາງພືກສາສາດທີ່ ຄືກັນ ຫຼື ຄ້າຍຄືກັນ ແລະ ມີຄຸນລັກສະນະສະເພາະຕົວ, ມີຄວາມສະໝ່ຳສະເໝີ, ມີຄວາມຄົງ ຕົວທາງດ້ານການຍະພາບ ແລະ ມີຄວາມແຕກຕ່າງຈາກກຸ່ມອື່ນ ຊຶ່ງປະກອບດ້ວຍ ແນວພັນພືດພື້ນເມືອງ, ແນວພັນພືດທ້ອງຖິ່ນ ແລະ ແນວພັນພືດປັບປຸງ.

ສຳລັບ ການຄຸ້ມຄອງ ແລະ ການດຳເນີນກິດຈະການ ກ່ຽວກັບແນວພັນພືດ ໄດ້ກຳນົດໄວ້ໃນລະບຽບ ການຕ່າງຫາກ.

ມາດຕາ 18 ຝຸ່ນ

ຝຸ່ນ ແມ່ນ ວັດຖຸ ທີ່ມີສ່ວນປະກອບ ທາງເຄມີ ທີ່ຈຳເປັນສຳລັບ ການຈະເລີນເຕີບໂຕ ແລະ ເພີ່ມຜົນ ຜະລິດຂອງພືດ ຊຶ່ງລວມມີ ສອງກຸ່ມຝຸ່ນຫຼັກ ຄື ຝຸ່ນອິງຄະທາດ ຫຼື ຝຸ່ນອິນຊີ ແລະ ຝຸ່ນອະນົງຄະທາດ ຫຼື ຝຸ່ນເຄມີ;

ສຳລັບ ການຄຸ້ມຄອງ ແລະ ການດຳເນີນກິດຈະການ ກ່ຽວກັບຝຸ່ນ ໄດ້ກຳນົດໄວ້ໃນລະບຽບການ ຕ່າງຫາກ.

ມາດຕາ 19 ຢາປາບສັດຕູພືດ

ຢາປາບສັດຕູພືດ ແມ່ນ ທາດ ຫຼື ທາດປະສົມ ເຄມີ ລວມທັງຊີວະພາບ ທີ່ນຳໃຊ້ ເພື່ອປ້ອງກັນ, ກຳຈັດ, ຄວບຄຸມ ສັດຕູພືດ ແລະ ພາຫະນຳເຊື້ອພະຍາດ ຫຼື ເພື່ອຄວບຄຸມ ການຈະເລີນເຕີບໂຕຂອງພືດ.

ສຳລັບ ການຄຸ້ມຄອງ ແລະ ການດຳເນີນກິດຈະການ ກ່ຽວກັບຢາປາບສັດຕູພືດ ໄດ້ກຳນົດໄວ້ໃນ ລະບຽບການຕ່າງຫາກ.

ມາດຕາ 20 ແຮງງານ

ແຮງງານ ແມ່ນ ພະລັງງານທາງດ້ານ ຮ່າງກາຍ ແລະ ມັນສະໝອງ ຂອງຜູ້ອອກແຮງງານ ທີ່ນຳໃຊ້ເຂົ້າໃນ ການປູກຝັງ ທີ່ກໍ່ໃຫ້ເກີດຜົນຜະລິດພືດ.

ຜູ້ອອກແຮງງານ ຕ້ອງ ມີຄວາມຮູ້ພື້ນຖານ ຫຼື ໄດ້ຮັບການຝຶກອົບຮົມ ກ່ຽວກັບ ເຕັກນິກການປູກຝັງ, ການອະນາໄມສ່ວນບຸກຄົນ, ຄວາມປອດໄພ ແລະ ມີປະສົບການ ກ່ຽວກັບການນຳໃຊ້ປັດໄຈການຜະລິດໃດໜຶ່ງ ແລະ ຕ້ອງມີສຸຂະພາບດີ.

ສຳລັບ ການຄຸ້ມຄອງ ແລະ ການນຳໃຊ້ແຮງງານ ໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍແຮງງານ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ມາດຕາ 21 ເຄື່ອງມືການຜະລິດ

ເຄື່ອງມືການຜະລິດ ແມ່ນ ອຸປະກອນທີ່ນຳໃຊ້ເຂົ້າໃນ ການປູກ, ການໃຫ້ນ້ຳ, ການເກັບກ່ຽວ, ການເກັບຮັກສາ ແລະ ການປຸງແຕ່ງ ຜົນຜະລິດພືດ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການກຳນົດ ລະບຽບການ ແລະ ມາດຕະຖານເຕັກນິກ ໃນການ ຜະລິດ ແລະ ນຳເຂົ້າ ເຄື່ອງມືການຜະລິດ ໂດຍປະສານສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ.

ເຄື່ອງມືການຜະລິດ ຕ້ອງມີການຄັດເລືອກ ເພື່ອໃຫ້ເໝາະສົມກັບເງື່ອນໄຂຂອງ ພື້ນທີ່, ຂະໜາດ, ລັກສະນະ ແລະ ລະດັບ ຂອງການປູກຝັງ.

ການຄຸ້ມຄອງຄຸນນະພາບຂອງເຄື່ອງມືການຜະລິດ ທີ່ນຳໃຊ້ເຂົ້າໃນການປູກຝັງ ຕ້ອງປະຕິບັດຕາມ ກົດໝາຍ ແລະ ລະບຽບການ ຂອງຂະແໜງການທີ່ກ່ຽວຂ້ອງ ໂດຍນຳໃຊ້ເຄື່ອງມື ທີ່ໄດ້ຮັບອະນຸຍາດ, ປະຕິບັດ ຕາມຄຳແນະນຳກ່ຽວກັບເຄື່ອງມື ແລະ ຕາມເງື່ອນໄຂກ່ຽວກັບ ການປົກປັກຮັກສາສິ່ງແວດລ້ອມ, ການຮັກສາ ສຸຂະພາບຂອງຊຸມຊົນ, ຄວາມປອດໄພຂອງອາຫານ ແລະ ການຈຳກັດການແຜ່ຂະຫຍາຍຂອງຈຸລິນຊີທີ່ບໍ່ ເປັນປະໂຫຍດ.

ມາດຕາ 22 ກົນຈັກການຜະລິດ

ກົນຈັກການຜະລິດ ແມ່ນ ເຄື່ອງຈັກທີ່ນຳໃຊ້ເຂົ້າໃນການປູກຝັງ ຊຶ່ງມີພາຫະນະທີ່ນຳໃຊ້ເຂົ້າໃນການ ບຸກເບີກເນື້ອທີ່ດິນ, ປັບໜ້າດິນ, ການ ໄຖ, ຄາດ, ຍົກຄູ ຫຼື ຮ່ອງ, ປັກດຳ, ເສຍຫຍ້າ, ໃສ່ຝຸ່ນ, ປ້ອງກັນ ຫຼື ປາບສັດຕູພືດ, ເກັບກ່ຽວ, ຟາດ, ເກັບຮັກສາ, ສີ, ບົດ, ຂົນສົ່ງ ແລະ ອື່ນໆ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການກຳນົດ ລະບຽບການ ແລະ ມາດຕະຖານເຕັກນິກ ໃນການຜະລິດ ແລະ ນຳເຂົ້າກົນຈັກການຜະລິດ ໂດຍປະສານສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ.

ກົນຈັກການຜະລິດ ຕ້ອງມີການຄັດເລືອກ ເພື່ອໃຫ້ເໝາະສົມກັບເງື່ອນໄຂຂອງ ພື້ນທີ່, ຂະໜາດ, ລັກສະນະ ແລະ ລະດັບຂອງການປູກພືດ ແນໃສ່ຮັບປະກັນຄວາມເໝາະສົມ ແລະ ການຫັນເປັນທັນສະໄໝ ເທື່ອລະກ້າວ.

ມາດຕາ 23 ທາດອາຫານເສີມພືດ

ທາດອາຫານເສີມພືດ ແມ່ນ ທາດອາຫານທີ່ພືດຕ້ອງການໃນປະລິມານທີ່ໜ້ອຍທີ່ສຸດ ແຕ່ຂາດບໍ່ໄດ້ ເຊັ່ນ ທາດ ເຫຼັກ (Fe), ມັງການ (Mn), ທອງແດງ (Cu), ໂບຣອນ (B), ສັງກະສີ (Zn), ໂມລິດີນຳ (Mo), ໂຄບານ (Co), ໂຊດຽມ (Na) ແລະ ອື່ນໆ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດ ມາດຕະຖານ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ທາດອາຫານເສີມພືດ.

ມາດຕາ 24 ວັດສະດຸປູກພືດ

ວັດສະດຸປູກພືດ ແມ່ນ ວັດສະດຸທີ່ໄດ້ຈາກທຳມະຊາດ ຊຶ່ງນຳໃຊ້ເຂົ້າໃນການປັບປຸງຄຸນສົມບັດຂອງດິນ ໃຫ້ມີຄວາມເໝາະສົມ ສຳລັບການປູກພືດ ເຊັ່ນ ຂຸຍໝາກພ້າວ, ຂີ້ແກບ, ເຟືອງ, ຂີ້ເລື່ອຍ ແລະ ອື່ນໆ.

ມາດຕາ 25 ສິ່ງມີຊີວິດທີ່ເປັນປະໂຫຍດ

ສິ່ງມີຊີວິດທີ່ເປັນປະໂຫຍດ ແມ່ນ ແມງໄມ້, ຂີ້ກະເດືອນ ແລະ ຈຸລິນຊີທີ່ເປັນປະໂຫຍດ ຊຶ່ງມີບົດບາດ ສຳຄັນໃນການ ປູກຝັງ, ຮັກສາ ແລະ ປັບປຸງ ຄວາມອຸດົມສົມບູນຂອງດິນ, ເພີ່ມຄວາມຕ້ານທານ ແລະ ການຈະເລີນເຕີບໂຕຂອງພືດ, ຍືດອາຍຸການເກັບຮັກສາ, ປ້ອງກັນ ແລະ ຄວບຄຸມສິ່ງມີຊີວິດທີ່ເປັນອັນຕະລາຍ, ການປະສົມເກສອນພືດ ແລະ ຮັບໃຊ້ຈຸດປະສົງອື່ນທີ່ເປັນປະໂຫຍດ.

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການ ສຶກສາ, ຄົ້ນຄວ້າ ແລະ ປະເມີນ ການນຳໃຊ້ ສິ່ງມີຊີວິດທີ່ເປັນປະໂຫຍດ ເພື່ອດຳເນີນມາດຕະການ ປົກປັກຮັກສາ ແລະ ນຳໃຊ້ ຢ່າງເໝາະສົມ ແລະ ຮັບຮອງ ເອົາລາຍການຊະນິດພັນຈຸລິນຊີທີ່ເປັນປະໂຫຍດ.

ໝວດທີ 3
ການຜະລິດ, ມາດຕະຖານການຜະລິດ ແລະ ການກຳນົດເຂດຈຸດສຸມການຜະລິດ

ມາດຕາ 26 ການຜະລິດ

ການຜະລິດ ແມ່ນ ຂະບວນການ, ຂັ້ນຕອນ ການປະຕິບັດ ກ່ຽວກັບ ການຜະລິດພືດ ຫຼື ການປູກພືດ ລວມທັງການຂະຫຍາຍເມັດພັນພືດ ໂດຍມີ ສອງຮູບແບບ ດັ່ງນີ້:

1. ການຜະລິດທົ່ວໄປ ຊຶ່ງແມ່ນ ຂະບວນການ, ຂັ້ນຕອນ ການປະຕິບັດ ກ່ຽວກັບ ການຜະລິດພືດ ຫຼື ການປູກພືດ ໂດຍມີການນຳໃຊ້ປັດໄຈການຜະລິດ ເຂົ້າໃນການຜະລິດ, ການເກັບກ່ຽວ ແລະ ການປຸງແຕ່ງ;
2. ການຜະລິດເປັນສິນຄ້າ ຊຶ່ງແມ່ນ ຂະບວນການ, ຂັ້ນຕອນ ການປະຕິບັດ ກ່ຽວກັບ ການຜະລິດ ພືດ ຫຼື ການປູກພືດ ໂດຍມີການນຳໃຊ້ ປັດໄຈການຜະລິດ, ເຕັກນິກ ແລະ ມາດຕະຖານການຜະລິດ ເພື່ອເປັນ ສິນຄ້າ.

ລັດ ຊຸກຍູ້ ແລະ ສົ່ງເສີມ ການຜະລິດທົ່ວໄປ ແລະ ການຜະລິດເປັນສິນຄ້າ ໃຫ້ເປັນການຜະລິດກະສິກຳ ສະອາດ.

ມາດຕາ 27 ການຜະລິດກະສິກຳສະອາດ

ການຜະລິດກະສິກຳສະອາດ ແມ່ນ ການດຳເນີນກິດຈະການກະສິກຳສະອາດ ເລີ່ມແຕ່ຂອດ ການຜະລິດ, ການປຸງແຕ່ງ ຈົນເຖິງການບໍລິການ.

ການຜະລິດກະສິກຳສະອາດ ປະກອບດ້ວຍ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ, ກະສິກຳທີ່ປອດໄພ ແລະ ກະສິກຳແບບອື່ນ.

ມາດຕາ 28 ການຜະລິດກະສິກຳອິນຊີ

ການຜະລິດກະສິກຳອິນຊີ ແມ່ນ ຂະບວນການຜະລິດທີ່ບໍ່ນຳໃຊ້ສານເຄມີສັງເຄາະ ເຂົ້າໃນການຜະລິດ ກະສິກຳ, ລະບົບການຜະລິດທີ່ຮັກສາ ຄວາມຍືນຍົງຂອງຄວາມອຸດົມສົມບູນຂອງດິນ, ຄວາມສົມດຸນຂອງລະບົບ ນິເວດວິທະຍາ ແລະ ມີຜົນດີຕໍ່ສຸຂະພາບຂອງ ຄົນ, ສັດ ໂດຍອີງໃສ່ຂະບວນການທາງນິເວດວິທະຍາ, ຄວາມຫຼາກ ຫຼາຍທາງຊີວະນາມາພັນ ແລະ ຮອບວຽນການຜະລິດ ທີ່ປັບຕົວເຂົ້າກັບສະພາບເງື່ອນໄຂຂອງທ້ອງຖິ່ນ, ທົດແທນ ການນຳໃຊ້ປັດໄຈການຜະລິດ ທີ່ອາດເກີດມີຜົນກະທົບທາງລົບ, ເປັນລະບົບປະສົມປະສານ ລະຫວ່າງ ຄວາມຮູ້ ພຸມປັນຍາທ້ອງຖິ່ນ, ເຕັກນິກ ແລະ ວິທະຍາສາດ ເພື່ອໃຫ້ເກີດຜົນປະໂຫຍດ ໃຫ້ແກ່ ຄົນ, ສັດ, ພືດ ແລະ ເປັນມິດກັບສິ່ງແວດລ້ອມ.

ມາດຕາ 29 ການຜະລິດກະສິກຳທີ່ດີ

ການຜະລິດກະສິກຳທີ່ດີ ແມ່ນ ລະບົບການຜະລິດ ທີ່ນຳໃຊ້ວິທີການ ແລະ ມາດຕະການຄວບຄຸມ ເລີ່ມແຕ່ ການຜະລິດ, ການເກັບກ່ຽວ ແລະ ຫຼັງການເກັບກ່ຽວ ເພື່ອປ້ອງກັນ ຫຼື ຫຼຸດຜ່ອນ ຄວາມສ່ຽງທີ່ເປັນອັນຕະລາຍ ຕໍ່ຜົນຜະລິດ, ຮັບປະກັນຄວາມສະອາດ ແລະ ຄວາມປອດໄພ ໃຫ້ແກ່ຜູ້ຜະລິດ ແລະ ຜູ້ບໍລິໂພກ.

ມາດຕາ 30 ການຜະລິດສິນຄ້າພືດ

ການຜະລິດສິນຄ້າພືດ ແມ່ນ ການກຳນົດຄຸນນະພາບ ແລະ ຄວາມປອດໄພ ຂອງຜົນຜະລິດ ໂດຍສະເພາະ ສີ, ຣົດຊາດ, ຂະໜາດ, ຄວາມຊຸ່ມ, ນ້ຳໜັກ ກົງກັບຄຸນລັກສະນະທາງຊີວະເຄມີຂອງພືດ ລວມທັງການ ຫຸ້ມຫໍ່, ບັນຈຸ, ຕິດສະຫຼາກ ແລະ ການໝາຍ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຕະຫຼາດ ຕາມມາດຕະຖານ ຂອງຄູ່ຄ້າ ພາຍໃນ ແລະ ຕ່າງປະເທດ.

ມາດຕາ 31 ການຜະລິດກະສິກຳທີ່ປອດໄພ

ການຜະລິດກະສິກຳທີ່ປອດໄພ ແມ່ນ ຮູບແບບການຜະລິດທົ່ວໄປ ຫຼື ການຜະລິດເປັນສິນຄ້າ ຊຶ່ງການ ຜະລິດດັ່ງກ່າວ ຕ້ອງປະຕິບັດຕາມມາດຕະຖານຄວາມປອດໄພຂອງອາຫານ.

ມາດຕາ 32 ມາດຕະຖານການຜະລິດ

ມາດຕະຖານການຜະລິດ ແມ່ນ ຂັ້ນຕອນການປະຕິບັດກ່ຽວກັບການຜະລິດພືດ ຊຶ່ງປະກອບດ້ວຍ:

1. ມາດຕະຖານການຜະລິດກະສິກຳອິນຊີ;
2. ມາດຕະຖານການຜະລິດກະສິກຳທີ່ດີ;
3. ມາດຕະຖານການຜະລິດສິນຄ້າພືດ;
4. ມາດຕະຖານການຜະລິດກະສິກຳທີ່ປອດໄພ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດມາດຕະຖານ ການຜະລິດກະສິກຳອິນຊີ, ການຜະລິດ ກະສິກຳທີ່ດີ, ການຜະລິດສິນຄ້າພືດ ແລະ ການຜະລິດກະສິກຳທີ່ປອດໄພ ບົນພື້ນຖານມາດຕະຖານ, ການກວດກາ ແລະ ການຢັ້ງຢືນ ໂດຍສອດຄ່ອງກັບ ພາກພື້ນ ແລະ ສາກົນ.

ມາດຕາ 33 ການກຳນົດເຂດຈຸດສຸມການຜະລິດ

ການກຳນົດເຂດຈຸດສຸມການຜະລິດ ຕ້ອງສອດຄ່ອງກັບຄຸນລັກສະນະທາງກາຍຍະພາບຂອງ ດິນ, ພຸມອາກາດ, ແຫຼ່ງນ້ຳ, ຄຸນລັກສະນະທາງຊີວະສາດຂອງພືດ ແລະ ຕາມທ່າແຮງຂອງທ້ອງຖິ່ນ, ສ້າງເຂດພື້ນທີ່ ຜະລິດ ຕິດພັນກັບ ການປຸງແຕ່ງ ແລະ ຕະຫຼາດ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການກຳນົດເງື່ອນໄຂ ກ່ຽວກັບການກຳນົດເຂດຈຸດສຸມການຜະລິດ.

ມາດຕາ 34 ການປົກປັກຮັກສາສິ່ງແວດລ້ອມໃນການຜະລິດ

ການປົກປັກຮັກສາສິ່ງແວດລ້ອມໃນການຜະລິດ ແມ່ນ ການນຳໃຊ້ ວິທີການ ແລະ ມາດຕະການ ເພື່ອ ປ້ອງກັນ, ອະນຸລັກ, ບຸລະນະຟື້ນຟູ ສິ່ງແວດລ້ອມ ແລະ ຄວບຄຸມມົນລະພິດ ໂດຍສອດຄ່ອງກັບແຜນຄຸ້ມຄອງ ສິ່ງແວດລ້ອມຮອບດ້ານ ທີ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ກຳນົດ ເພື່ອບໍ່ໃຫ້ສິ່ງຜົນກະທົບຕໍ່ ຊີວິດ, ສຸຂະພາບ, ທີ່ຢູ່ອາໄສ ແລະ ບ່ອນທຳມາຫາກິນ.

ການ ບຸກເບີກ, ກະກຽມ ແລະ ນຳໃຊ້ ທີ່ດິນກະສິກຳ, ການກໍ່ສ້າງກິດຈະການຊົນລະປະທານ, ການກໍ່ສ້າງໂຮງງານປຸງແຕ່ງພືດ, ການນຳໃຊ້ ນ້ຳ, ຝຸ່ນ, ການເກັບຮັກສາຢາປາບສັດຕູພືດ ແລະ ອື່ນໆ ຕ້ອງຈຳກັດ ຜົນກະທົບ ຕໍ່ ຄົນ, ສັດ, ດິນ, ນ້ຳ, ປ່າໄມ້ ແລະ ອາກາດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງແຈ້ງຂໍ້ມູນ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ໃນກໍລະນີພົບເຫັນ ປາກົດການໃດໜຶ່ງທີ່ຜິດປົກກະຕິ ກ່ຽວກັບມົນລະພິດທາງສິ່ງແວດລ້ອມ ຊຶ່ງເປັນສາເຫດທີ່ພາໃຫ້ເກີດ ຜົນກະທົບ ທາງລົບຕໍ່ການຜະລິດພືດ.

ໝວດທີ 4
ການເກັບກ່ຽວ

ມາດຕາ 35 ການເກັບກ່ຽວ

ການເກັບກ່ຽວ ແມ່ນ ການເກັບກູ້ເອົາຜົນຜະລິດກະສິກຳ ມາເກັບຮັກສາ ແລະ ນຳໃຊ້ວິທະຍາການ ຫຼັງການເກັບກ່ຽວ.

ວິທະຍາການຫຼັງການເກັບກ່ຽວ ແມ່ນ ວິທີການ ແລະ ເຕັກໂນໂລຊີ ທີ່ນຳໃຊ້ເຂົ້າໃນການເກັບກ່ຽວ ເປັນຕົ້ນ ການ ທຳຄວາມສະອາດ, ບົ່ມ, ເຄືອບ, ຄັດແຍກ, ຫຸ້ມຫໍ່, ບັນຈຸ, ປຸງແຕ່ງ, ຂົນສົ່ງ ເພື່ອຮັບປະກັນ ຄຸນນະພາບ, ຫຼຸດຜ່ອນຄວາມເສຍຫາຍ, ເພີ່ມມູນຄ່າຂອງຜົນຜະລິດ ແລະ ເກັບຮັກສາໄວ້ເປັນເວລາຍາວ ຫຼັງການເກັບກ່ຽວ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດວິທະຍາການຫຼັງການເກັບກ່ຽວ.

ມາດຕາ 36 ສາງເກັບມ້ຽນ

ສາງເກັບມ້ຽນ ແມ່ນ ອາຄານ, ສະຖານທີ່ ສຳລັບ ເກັບມ້ຽນ ຜົນຜະລິດພືດ, ແນວພັນພືດ, ຝຸ່ນ ແລະ ຢາປາບສັດຕູພືດ ເພື່ອຮັກສາຄຸນນະພາບ ຊຶ່ງມີ ເລົ້າເຂົ້າ, ສາງເກັບມ້ຽນເມັດພັນພືດ, ຝຸ່ນ, ສາງເຢັນ ສຳລັບ ເກັບມ້ຽນ ຜັກ, ໝາກໄມ້ ແລະ ສາງສະເພາະສຳລັບເກັບມ້ຽນຢາປາບສັດຕູພືດ.

ສາງເກັບມ້ຽນ ຕ້ອງຮັບປະກັນໃຫ້ຖືກຕ້ອງຕາມ ລະບຽບການ ແລະ ມາດຕະຖານເຕັກນິກ ທີ່ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ກຳນົດ ແລະ ຖືກຕ້ອງຕາມຜັງເມືອງ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ.

ມາດຕາ 37 ການເກັບຮັກສາ ແລະ ການຂົນສົ່ງ ພືດ ແລະ ຜະລິດຕະພັນພືດ

ການເກັບຮັກສາ ແລະ ການຂົນສົ່ງ ພືດ ແລະ ຜະລິດຕະພັນພືດ ຕ້ອງນຳໃຊ້ວິທີການ ແລະ ມາດຕະການ ປ້ອງກັນການປົນເປື້ອນຕໍ່ຜົນຜະລິດ ໂດຍມີການ ແຍກ, ເກັບຮັກສາ, ທຳຄວາມສະອາດ, ປົກຫຸ້ມ ຫຼື ວິທີການອື່ນ ທີ່ເໝາະສົມ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດ ມາດຕະການ ແລະ ວິທີການ ກ່ຽວກັບການເກັບ ຮັກສາ ແລະ ການຂົນສົ່ງ ພືດ ແລະ ຜະລິດຕະພັນພືດ.

ມາດຕາ 38 ການຄຸ້ມຄອງຄຸນນະພາບຂອງຜົນຜະລິດພືດ

ການຄຸ້ມຄອງຄຸນນະພາບຂອງຜົນຜະລິດພືດ ແມ່ນ ການກຳນົດຄຸນນະພາບຂອງຜົນຜະລິດພືດ ໃຫ້ສອດຄ່ອງກັບມາດຕະຖານຂອງ ສປປ ລາວ ຫຼື ສາກົນ ຕາມມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າ ພືດ, ກະສິກຳທີ່ປອດໄພ ແລະ ກະສິກຳແບບອື່ນ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດ, ຮັບຮອງ ແລະ ຄຸ້ມຄອງຄຸນນະພາບຂອງ ຜົນຜະລິດ ພືດ ໂດຍປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ມາດຕາ 39 ການບໍລິຫານຈັດການສິ່ງເສດເຫຼືອຈາກການຜະລິດພືດ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດມາດຕະຖານການບໍລິຫານຈັດການສິ່ງເສດເຫຼືອ ຈາກການຜະລິດພືດ ເຊັ່ນ ການເກັບລວບລວມ, ການທຳລາຍ ຫຼື ນຳໃຊ້ສິ່ງເສດເຫຼືອຈາກການຜະລິດພືດ ໃຫ້ຖືກຕ້ອງ ເພື່ອປົກປ້ອງ ແລະ ຄວບຄຸມ ມົນລະພິດທາງສິ່ງແວດລ້ອມ ແລະ ການແຜ່ຂະຫຍາຍຂອງຈຸລິນຊີ ທີ່ເປັນອັນຕະລາຍ.

ມາດຕາ 40 ການຄຸ້ມຄອງຄວາມປອດໄພຂອງຜົນຜະລິດພືດ

ການຄຸ້ມຄອງຄວາມປອດໄພຂອງຜົນຜະລິດພືດ ແມ່ນ ການຄຸ້ມຄອງຜົນຜະລິດພືດ ໃຫ້ມີຄວາມປອດໄພ ແລະ ມີປະໂຫຍດຕໍ່ສຸຂະພາບ ເໝາະສົມແກ່ການບໍລິໂພກ ຊຶ່ງຕ້ອງໄດ້ຄວບຄຸມ ຄຸນລັກສະນະ ແລະ ຄຸນນະພາບ ຂອງຜົນຜະລິດພືດ ໃນທຸກຂັ້ນຕອນຕາມຕ່ອງໂສ້ການຜະລິດ ໂດຍເລີ່ມຈາກ ການປູກ, ການເກັບກ່ຽວ, ການເກັບຮັກສາ ແລະ ການປຸງແຕ່ງ ຈົນເຖິງການບໍລິໂພກ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດ, ຮັບຮອງ ແລະ ຄຸ້ມຄອງຄວາມປອດໄພຂອງຜົນຜະລິດພືດ ໂດຍປະສານສົມທົບກັບກະຊວງສາທາລະນະສຸກ.

ໝວດທີ 5
ການປຸງແຕ່ງພືດ

ມາດຕາ 41 ການປຸງແຕ່ງພືດ

ການປຸງແຕ່ງພືດ ແມ່ນ ການນຳເອົາ ພືດ ຫຼື ຜົນຜະລິດພືດ ມາຜ່ານຂະບວນການແປຮູບ ຈາກວັດຖຸດິບ ຫຼື ວັດຖຸດິບເຄິ່ງສຳເລັດຮູບ ໄປສູ່ຜະລິດຕະພັນໃໝ່ ເປັນສິນຄ້າ ໂດຍມີການຫຸ້ມຫໍ່, ການກວດກາ, ວິໄຈ, ຢັ້ງຢືນ ຄວາມປອດໄພຂອງຜົນຜະລິດພືດ, ການສ້າງ ສາງ, ລານຕາກ, ໂຮງອົບ, ຫ້ອງເຢັນ ແລະ ໂຮງງານປຸງແຕ່ງພືດ.

ລັດ ຊຸກຍູ້, ສົ່ງເສີມ ໃຫ້ທຸກພາກສ່ວນເສດຖະກິດ ລົງທຶນພັດທະນາໂຄງລ່າງພື້ນຖານວິທະຍາສາດ ເຕັກໂນໂລຊີ, ໂຮງງານປຸງແຕ່ງພືດ, ຫ້ອງວິໄຈຄຸນນະພາບມາດຕະຖານສິນຄ້າພືດ ໃຫ້ເປັນລະບົບ ແລະ ສອດຄ່ອງ ກັບມາດຕະຖານຂອງ ພາກພື້ນ ແລະ ສາກົນ, ກຳນົດ ກົນໄກ ແລະ ວິທີການຄຸ້ມຄອງການລົງທຶນປຸງແຕ່ງພືດ ເປັນສິນຄ້າ.

ມາດຕາ 42 ການຫຸ້ມຫໍ່

ການຫຸ້ມຫໍ່ ແມ່ນ ວິທີການບັນຈຸ ຫຼື ການເກັບຮັກສາ ຜະລິດຕະພັນພືດ ຊຶ່ງພາຊະນະທີ່ໃຊ້ຫຸ້ມຫໍ່ ຕ້ອງມີຄວາມແຂງແຮງ, ທົນທານ, ສະອາດ, ຖືກສຸຂານາໄມ, ບໍ່ເຄີຍນຳໃຊ້ມາກ່ອນ ເພື່ອປ້ອງກັນບໍ່ໃຫ້ເກີດ ຄວາມເສຍຫາຍໃນເວລາຂົນສົ່ງ ຫຼື ໃຫ້ສອດຄ່ອງກັບເງື່ອນໄຂດ້ານສຸຂານາໄມພືດ ຂອງປະເທດຄູ່ຄ້າ.

ມາດຕາ 43 ການ ກວດກາ, ວິໄຈ ແລະ ຢັ້ງຢືນ ຄວາມປອດໄພຂອງຜົນຜະລິດພືດ

ການກວດກາ ຄວາມປອດໄພຂອງຜົນຜະລິດພືດ ແມ່ນ ການກວດກາ, ຕິດຕາມ ແລະ ປະເມີນຄວາມສ່ຽງ ນັບແຕ່ຂອດ ການຜະລິດ, ການປຸງແຕ່ງ ແລະ ການບໍລິການ ເພື່ອຫຼຸດຜ່ອນຄວາມສ່ຽງ ຂອງຜົນຜະລິດພືດ.

ການວິໄຈ ແລະ ຢັ້ງຢືນ ຄວາມປອດໄພຂອງຜົນຜະລິດພືດ ແມ່ນ ການຊອກຫາສານພິດຕົກຄ້າງຂອງ ຢາປາບສັດຕູພືດ, ສິ່ງແປກປອມ ແລະ ການປົນເປື້ອນຂອງຈຸລິນຊີ ໃນຜົນຜະລິດພືດ ຕາມມາດຕະຖານທີ່ໄດ້ ກຳນົດໄວ້.

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບ ຂະແໜງການສາທາລະນະ ສຸກ ໃນການກຳນົດວິທີການ ກວດກາ, ວິໄຈ ແລະ ຢັ້ງຢືນ ຄວາມປອດໄພຂອງຜົນຜະລິດພືດ ຕາມມາດຕະຖານ ທີ່ໄດ້ກຳນົດໄວ້.

ມາດຕາ 44 ການສ້າງ ສາງ, ລານຕາກ, ໂຮງອົບ, ຫ້ອງເຢັນ ແລະ ໂຮງງານປຸງແຕ່ງພືດ

ລັດ ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນສ້າງ ສາງ, ລານຕາກ, ໂຮງອົບ, ຫ້ອງເຢັນ ແລະ ໂຮງງານປຸງແຕ່ງພືດ ໃຫ້ໄດ້ຕາມມາດຕະຖານສາກົນ ເພື່ອຮັບປະກັນ ຄຸນນະພາບຂອງຜະລິດຕະພັນພືດ.

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການໃນການຄຸ້ມຄອງ ສາງ, ລານຕາກ, ໂຮງອົບ, ຫ້ອງເຢັນ ແລະ ໂຮງງານປຸງແຕ່ງພືດ.

ໝວດທີ 6
ຕະຫຼາດພືດ

ມາດຕາ 45 ຕະຫຼາດພືດ

ຕະຫຼາດພືດ ແມ່ນ ບ່ອນ ຊື້ ຂາຍ, ແລກປ່ຽນ ພືດ, ຜະລິດຕະພັນພືດ ແລະ ປັດໄຈການຜະລິດ ລວມທັງ ບ່ອນຂາຍຍົກ ຜົນຜະລິດພືດ ແລະ ການບໍລິການດ້ານການປຸກຝັງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີສ່ວນຮ່ວມໃນການ ສ້າງ ແລະ ພັດທະນາ ຕະຫຼາດພືດ ດ້ວຍຫຼາຍຮູບແບບ ແລະ ຫຼາຍລະດັບ ເພື່ອເປັນບ່ອນຈຳໜ່າຍ ຜົນຜະລິດພືດ, ສິນຄ້າພືດ ເຊັ່ນ ຕະຫຼາດນັດ, ຕະຫຼາດຂາຍສົ່ງ ຂາຍຍ່ອຍ, ການໂຄສະນາ, ແລກປ່ຽນ, ຊື້ ຂາຍ, ການປຸງແຕ່ງ, ສ້າງຍີ່ຫໍ້ຜະລິດຕະພັນພືດ, ພັດທະນາຜະລິດຕະພັນພືດ, ງານວາງສະແດງສິນຄ້າ, ການເຈລະຈາເຕົາກຶນາເປີດຕະຫຼາດ ແລະ ອຳນວຍຄວາມ ສະດວກດ້ານການຄ້າ ທັງພາຍໃນ ແລະ ຕ່າງປະເທດ.

ມາດຕາ 46 ການກຳນົດໂຄງປະກອບລາຄາ

ການກຳນົດໂຄງປະກອບລາຄາ ແມ່ນ ການຄິດໄລ່ຕົ້ນທຶນ ການຜະລິດພືດ, ການຊື້, ຄ່າບໍລິການ, ການຈໍລະຈອນ, ລາຄາຈຳໜ່າຍ ແລະ ຜົນກຳໄລຕົວຈິງ ຂອງ ສິນຄ້າພືດ ແລະ ຜະລິດຕະພັນພືດ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການໃນການຄິດໄລ່ຕົ້ນທຶນການຜະລິດ ເພື່ອວາງມາດ ຕະການຄວບຄຸມຕົ້ນທຶນການຜະລິດ ແລະ ສະໜອງຂໍ້ມູນ ໃຫ້ແກ່ກະຊວງອຸດສາຫະກຳ ແລະ ການຄ້າ.

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການໃນການກຳນົດລາຄາ ສິນຄ້າພືດ ແລະ ຜະລິດຕະພັນພືດ ລວມທັງວາງມາດຕະການຄວບຄຸມລາຄາສິນຄ້າພືດ ດ້ວຍການ ກຳນົດລາຄາ ຕ່ຳສຸດ, ສູງສຸດ, ຄວບຄຸມສິນຄ້າ ໃນຄັງແຮສຳຮອງ, ຖົມຊຸມສິນຄ້າ ແລະ ການບໍລິການ, ການດັດສົມການສະໜອງ ແລະ ຄວາມຕ້ອງການ.

ລັດ ຄົ້ນຄວ້າລາຄາຕ່ຳສຸດ ສຳລັບສິນຄ້າທີ່ໄດ້ຈາກການປຸກຝັງບາງຊະນິດ ທີ່ຈຳເປັນແກ່ການດຳລົງຊີວິດ ຂອງປະຊາຊົນ. ໃນກໍລະນີຈຳເປັນ ລັດ ສາມາດເກັບຊື້ຜົນຜະລິດພືດ ເພື່ອຮັກສາລາຄາໃຫ້ໝັ້ນທ່ຽງ ເປັນຕົ້ນ ໃນລະດູການເກັບກ່ຽວ ແນໃສ່ປົກປ້ອງຜົນປະໂຫຍດຂອງ ຜູ້ຜະລິດ ແລະ ຜູ້ບໍລິໂພກ.

ມາດຕາ 47 ການເປີດຕະຫຼາດ ພືດ ແລະ ຜະລິດຕະພັນພືດ

ການເປີດຕະຫຼາດ ພືດ ແລະ ຜະລິດຕະພັນພືດ ແມ່ນ ຂະບວນການເຈລະຈາເຕົາກຶນາ ກ່ຽວກັບ ຄຸນນະພາບ, ມາດຕະຖານ ແລະ ຄວາມປອດໄພ ຈາກພະຍາດ, ແມງໄມ້, ສັດຕູພືດ, ວັດສະພືດ ແລະ ເຄມີຕົກຄ້າງ ດ້ວຍການ ເກັບກຳຂໍ້ມູນ, ປະເມີນຄວາມສ່ຽງສັດຕູພືດ ແລະ ປຶກສາຫາລືມາດຕະການສຸຂານາໄມ ແລະ ສຸຂາ ນາໄມພືດ ເພື່ອສົ່ງອອກສິນຄ້າກະສິກຳ ທີ່ໄດ້ຈາກການປຸກຝັງ ຕາມເງື່ອນໄຂ ຫຼື ລະບຽບການ ທີ່ປະເທດນຳເຂົ້າ ກຳນົດ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດ ຫຼັກການ, ຂັ້ນຕອນ ແລະ ວິທີການ ເຈລະຈາ ເຕົາກຶນາເປີດຕະຫຼາດ ພືດ ແລະ ຜະລິດຕະພັນພືດ.

ໝວດທີ 7
ການນຳເຂົ້າ ແລະ ສົ່ງອອກ

ມາດຕາ 48 ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຕໍ່ ແລະ ການສົ່ງຜ່ານ ເມັດພັນພືດ

ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຕໍ່ ແລະ ການສົ່ງຜ່ານ ເມັດພັນພືດ ທຸກຊະນິດ ຕ້ອງປະຕິບັດ ຕາມກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

ສໍາລັບເງື່ອນໄຂ, ຂັ້ນຕອນ ໃນການຂໍອະນຸຍາດ ນໍາເຂົ້າ, ສົ່ງອອກ, ສົ່ງອອກຕໍ່ ແລະ ສົ່ງຜ່ານ ເມັດພັນພືດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 49 ການນໍາເຂົ້າ, ການສົ່ງອອກ, ການສົ່ງອອກຕໍ່ ແລະ ການສົ່ງຜ່ານ ພືດ ແລະ ຜະລິດຕະພັນພືດ

ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ເປັນຜູ້ອະນຸມັດແຜນການປະຈໍາປີ ສໍາລັບການ ນໍາເຂົ້າ, ສົ່ງອອກ, ສົ່ງອອກຕໍ່ ແລະ ສົ່ງຜ່ານ ພືດ ແລະ ຜະລິດຕະພັນພືດ ຕາມການສະເໜີຂອງພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ.

ການນໍາເຂົ້າ, ການສົ່ງອອກ, ການສົ່ງອອກຕໍ່ ແລະ ການສົ່ງຜ່ານ ພືດ ແລະ ຜະລິດຕະພັນພືດ ທຸກຊະນິດ ຕ້ອງປະຕິບັດຕາມ ກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

ໝວດທີ 8
ການຄົ້ນຄວ້າດ້ານການປຸກຝັງ

ມາດຕາ 50 ການຄົ້ນຄວ້າດ້ານການປຸກຝັງ

ການຄົ້ນຄວ້າດ້ານການປຸກຝັງ ແມ່ນ ການພັດທະນາ ກ່ຽວກັບ ເຕັກນິກ, ວິທີການ, ມາດຕະຖານ ການປຸກຝັງ ເພື່ອຍົກສະມັດຖະພາບການຜະລິດ ໃຫ້ໄດ້ ປະລິມານ, ຄຸນນະພາບ, ການຄົ້ນຄວ້າ ແລະ ພັດທະນາ ເຕັກນິກ, ປັດໄຈການຜະລິດ, ການຄົ້ນຄວ້າ ແລະ ພັດທະນາ ວິທະຍາການຫຼັງການເກັບກ່ຽວ ເພື່ອທົດແທນ ການນໍາເຂົ້າ, ຫຼີກລ່ຽງບັນຫາຂອງການຜະລິດ ທີ່ມີຜົນກະທົບຕໍ່ການລົງທຶນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໄດ້ຮັບການສົ່ງເສີມ ໃຫ້ລົງທຶນ ໃນການຄົ້ນຄວ້າດ້ານການປຸກຝັງ, ສ້າງຕັ້ງສະຖາບັນ ຫຼື ສູນຄົ້ນຄວ້າທົດລອງ ແລະ ຝຶກອົບຮົມ ດ້ານກະສິກໍາ ເຊັ່ນ ເຕັກນິກ ການປຸກ, ການເພີ່ມຜົນຜະລິດ, ການບໍລິການດ້ານກະສິກໍາ ແລະ ອື່ນໆ.

ມາດຕາ 51 ການປຸກພືດທີ່ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໄດ້ຮັບການສົ່ງເສີມໃນການ ຄົ້ນຄວ້າ, ວິໄຈ, ທົດລອງ ແລະ ນໍາໃຊ້ວິທີການຕ່າງໆ ເພື່ອປຸກພືດໃຫ້ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນການປ່ອຍ ທາດອາຍເຮືອນແກ້ວໃນການຜະລິດພືດ ເປັນຕົ້ນ ການກໍານົດ ເຕັກນິກ, ວິທີການ, ປະຕິທິນ ການປຸກພືດ ທີ່ເໝາະສົມ, ຄັດເລືອກແນວພັນພືດ ທີ່ມີຄວາມທົນທານ ແລະ ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.

ມາດຕາ 52 ພັນພືດ

ພັນພືດ ແມ່ນ ກຸ່ມຂອງພືດ ທີ່ມີລັກສະນະທາງພືຊສາສາດຢ່າງດຽວກັນ ແລະ ຍັງບໍ່ທັນຮູ້ຈັກກັນທົ່ວໄປ ຊຶ່ງສາມາດກໍານົດຄຸນລັກສະນະຕ່າງໆ ທີ່ເປັນຜົນມາຈາກ ປະເພດພັນທຸກໍາໃດໜຶ່ງ ຫຼື ຫຼາຍປະເພດພັນທຸກໍາ ຮ່ວມກັນ, ມີຄວາມໃໝ່, ມີຄວາມແຕກຕ່າງ ຢ່າງໜ້ອຍ ໜຶ່ງຄຸນລັກສະນະໃນພືດຊະນິດດຽວກັນ, ມີຄວາມ ສະໝໍ່າສະເໝີ ແລະ ມີຄວາມຄົງຕົວ ໃນເວລານໍາໄປຂະຫຍາຍພັນ.

ມາດຕາ 53 ພັນພືດປັບປຸງ

ພັນພືດປັບປຸງ ແມ່ນ ພັນພືດຈາກພືດ ຕົ້ນໜຶ່ງ ຫຼື ຫຼາຍຕົ້ນ ຖືກນໍາໄປຂະຫຍາຍພັນ ດ້ວຍການເອົາມາ ປະສົມກັນ ຫຼື ການຄົ້ນພົບ ແລະ ພັດທະນາພັນພືດ ທີ່ມີຢູ່ໃນປັດຈຸບັນ ເພື່ອເຮັດໃຫ້ເກີດພັນພືດໃໝ່ ໂດຍນັກປັບປຸງພັນພືດ.

ສໍາລັບ ພັນພືດພື້ນເມືອງ ແລະ ພັນພືດທ້ອງຖິ່ນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 54 ການຢັ້ງຢືນພັນພືດໃໝ່

ພັນພືດ ທຸກປະເພດ ແລະ ທຸກຊະນິດ ກ່ອນນຳໄປຈົດທະບຽນພັນພືດໃໝ່ ຕ້ອງໄດ້ຮັບການ ຢັ້ງຢືນ ແລະ ຮັບຮອງ ຈາກກະຊວງກະສິກຳ ແລະ ສິ່ງແວດລ້ອມ ເສຍກ່ອນ.

ສຳລັບ ເງື່ອນໄຂ, ເອກະສານປະກອບ ແລະ ຂັ້ນຕອນ ການພິຈາລະນາການຢັ້ງຢືນ ແລະ ຮັບຮອງພັນພືດ ເປັນພັນພືດໃໝ່ນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 55 ປະເພດ, ຊະນິດ, ການຈົດທະບຽນ ພັນພືດໃໝ່ ແລະ ນັກປັບປຸງພັນພືດ

ປະເພດ, ຊະນິດ, ການຈົດທະບຽນ ພັນພືດໃໝ່ ແລະ ນັກປັບປຸງພັນພືດ ໃຫ້ປະຕິບັດຕາມທີ່ໄດ້ ກຳນົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ລະບຽບການທີ່ກ່ຽວຂ້ອງ.

ພາກທີ III
ການສົ່ງເສີມວຽກງານປຸກຝັງ

ມາດຕາ 56 ການສົ່ງເສີມວຽກງານປຸກຝັງ

ການສົ່ງເສີມວຽກງານປຸກຝັງ ປະກອບດ້ວຍ:

1. ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ;
2. ການສະໜອງໂຄງລ່າງພື້ນຖານທີ່ຈຳເປັນ;
3. ການສົ່ງເສີມທີ່ດິນປຸກຝັງ;
4. ການນຳໃຊ້ປັດໄຈການຜະລິດ;
5. ການນຳໃຊ້ ວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ ທັນສະໄໝ ແລະ ພະລັງງານ;
6. ສິນເຊື່ອ ແລະ ການເຂົ້າເຖິງແຫຼ່ງທຶນ;
7. ນະໂຍບາຍດ້ານ ພາສີ, ອາກອນ;
8. ການສ້າງ ສູນຄົ້ນຄວ້າທົດລອງ, ສູນພັດທະນາກະສິກຳ ແລະ ສະຖານີບໍລິການເຕັກນິກ;
9. ການເຂົ້າເຖິງ ແລະ ການຂະຫຍາຍ ຕະຫຼາດ;
10. ການນຳໃຊ້ ແລະ ການປົກປ້ອງຊັບສິນທາງປັນຍາ;
11. ການສົ່ງເສີມ ຄອບຄົວ, ກຸ່ມ, ສະຫະກອນ ແລະ ສະມາຄົມ ຜະລິດກະສິກຳ;
12. ການສະໜອງ ຂໍ້ມູນ ຂ່າວສານ;
13. ການສົ່ງເສີມຄັງແຮແນວພັນພືດ;
14. ການຜະລິດແບບມີສັນຍາ;
15. ການຂຶ້ນທະບຽນສວນປຸກ;
16. ການໃຫ້ນະໂຍບາຍອື່ນ ທີ່ລັດກຳນົດໃນແຕ່ລະໄລຍະ.

ມາດຕາ 57 ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເປັນເຈົ້າການເອົາໃຈໃສ່ ຕໍ່ການສ້າງ ສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການປຸກຝັງ ດ້ວຍການ ສ້າງ ແລະ ປັບປຸງ ລະບຽບການ ໃຫ້ມີຄວາມ ຈະແຈ້ງ ແລະ ຮັດກຸມ, ກຳນົດວິທີການແກ້ໄຂບັນຫາທີ່ເປັນການກີດໜ່ວງ ພ້ອມກັນນັ້ນ ກໍຕ້ອງເພີ່ມທະວີ ການບໍລິຫານ ແລະ ການບໍລິການ ຂອງຕົນໃຫ້ມີ ປະສິດທິພາບ, ປະສິດທິຜົນ ແລະ ໂປ່ງໃສ.

ມາດຕາ 58 ການສະໜອງໂຄງລ່າງພື້ນຖານທີ່ຈຳເປັນ

ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນ ທີ່ກ່ຽວຂ້ອງ ເປັນເຈົ້າການ ບຸລະນະ ຮັກສາ, ຄົ້ນຄວ້າ ສ້າງ, ສະໜອງ ໂຄງລ່າງພື້ນຖານ ທີ່ຈຳເປັນຕາມແຜນພັດທະນາເສດຖະກິດ-ສັງຄົມ ເພື່ອສ້າງ ເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ການປຸກຝັງ ສາມາດນຳໃຊ້ເຂົ້າໃນການດຳເນີນທຸລະກິດ, ການຜະລິດ ເປັນຕົ້ນ ເສັ້ນທາງຄົມມະນາຄົມ, ຊົນລະປະທານ, ຕາໜ່າງໄຟຟ້າ, ການໂທລະຄົມມະນາຄົມ.

ມາດຕາ 59 ການສົ່ງເສີມທີ່ດິນປຸກຝັງ

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການໃນການຄຸ້ມຄອງ ແລະ ສົ່ງເສີມທີ່ດິນປຸກຝັງ ດ້ວຍ ການສຳຫຼວດ, ການວັດແທກ, ການກຳນົດເຂດ, ການວາງແຜນ ແລະ ນຳໃຊ້ເນື້ອທີ່ດິນປຸກຝັງ ໃຫ້ຖືກຕ້ອງ ຕາມຊະນິດພືດ, ດຳເນີນການຕິດຕາມ, ກວດກາ ການນຳໃຊ້ທີ່ດິນປຸກຝັງຢ່າງເປັນລະບົບ, ສົ່ງເສີມໃຫ້ມີການປຸກ ພືດຫຼາຍຮອບວຽນຕໍ່ປີ ໃນເຂດທີ່ມີເງື່ອນໄຂການສະໜອງນ້ຳ ເປັນຕົ້ນ ການຜະລິດເຂົ້າ ນາປີ ແລະ ນາແຊງ ຫຼື ພືດຊະນິດອື່ນ ທີ່ມີທ່າແຮງ ໂດຍຜ່ານການສະໜອງ ແນວພັນພືດ, ຝຸ່ນ, ຢາປາບສັດຕູພືດ.

ມາດຕາ 60 ການນຳໃຊ້ປັດໄຈການຜະລິດ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບ ຄົ້ນຄວ້າ, ວິໄຈ, ທົດລອງວິທະຍາສາດ ກ່ຽວກັບ ແນວພັນພືດທີ່ດີ ຢູ່ພາຍໃນ ແລະ ຈາກຕ່າງປະເທດ, ນຳໃຊ້ແຮງງານທີ່ເໝາະສົມກັບເງື່ອນໄຂ ຂອງແຕ່ລະທ້ອງຖິ່ນ ໃນ ສປປ ລາວ ເພື່ອເຮັດໃຫ້ການປຸກຝັງ ມີປະສິດທິພາບ ແລະ ປະສິດທິຜົນ ໂດຍປະສານ ສົມທົບກັບ ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ລັດ ຊຸກຍູ້, ສົ່ງເສີມ ທຸກພາກສ່ວນເສດຖະກິດ ຜະລິດ ແລະ ນຳໃຊ້ ຝຸ່ນອົງຄະທາດ, ຝຸ່ນອະນົງຄະທາດ ແລະ ຝຸ່ນຊີວະພາບ ຢູ່ພາຍໃນປະເທດ ໃຫ້ໄດ້ຄຸນນະພາບ ເພື່ອສະໜອງໃຫ້ແກ່ການຜະລິດ ໃນຂອບເຂດ ທົ່ວປະເທດ ຫຼື ໃນກໍລະນີຈຳເປັນ ກໍສາມາດນຳເຂົ້າຈາກຕ່າງປະເທດ ໂດຍໄດ້ຮັບອະນຸຍາດຈາກຂະແໜງການ ກະສິກຳ ແລະ ສິ່ງແວດລ້ອມ ຕາມກົດໝາຍ.

ລັດ ຊຸກຍູ້, ສົ່ງເສີມ ການຜະລິດ, ສະໜອງ ແລະ ນຳໃຊ້ ຢາປາບສັດຕູພືດ ລວມທັງຢາປາບສັດຕູພືດ ຊີວະພາບ ໃນການປ້ອງກັນ ແລະ ກຳຈັດສັດຕູພືດ. ໃນກໍລະນີມີການລະບາດ ຂອງສັດຕູພືດຮ້າຍແຮງ ໃຫ້ນຳໃຊ້ ຢາປາບສັດຕູພືດເຄມີ ໂດຍປະຕິບັດຕາມຫຼັກວິຊາການ ຢ່າງຖືກຕ້ອງ ຊຶ່ງບໍ່ສົ່ງຜົນກະທົບ ຕໍ່ ຄົນ, ສັດ, ພືດ, ດິນ, ນ້ຳ ແລະ ສິ່ງແວດລ້ອມ.

ລັດ ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຜະລິດ, ສະໜອງ, ບໍລິການ ເຄື່ອງມື, ອຸປະກອນ ແລະ ກົນຈັກການຜະລິດກະສິກຳ ທີ່ທັນສະໄໝ ແລະ ເໝາະສົມ ເປັນຕົ້ນ ພາຫະນະສຳລັບ ການປຸກ, ບໍລະບັດຮັກສາ, ເກັບກ່ຽວ ເພື່ອນຳໃຊ້ເຂົ້າໃນການປຸກຝັງ ຢ່າງມີ ປະສິດທິພາບ ແລະ ປະສິດທິຜົນ.

ມາດຕາ 61 ການນຳໃຊ້ ວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ ທັນສະໄໝ ແລະ ພະລັງງານ

ລັດ ຊຸກຍູ້, ສົ່ງເສີມ, ຄົ້ນຄວ້າ ທົດລອງ ດ້ານວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ ແລະ ວິຊາການ ທີ່ກ້າວໜ້າ ກ່ຽວກັບການປຸກຝັງ ດ້ວຍການ ຝຶກອົບຮົມ, ປະຊຸມ, ສຳມະນາ, ທັດສະນະສຶກສາ, ສົ່ງພະນັກງານ ວິຊາການລົງແນະນຳຢູ່ກັບທີ່ ເພື່ອເຮັດໃຫ້ວຽກງານປຸກຝັງ ຂະຫຍາຍຕົວຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝ.

ລັດ ສົ່ງເສີມໃຫ້ມີການນຳໃຊ້ ວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ ທັນສະໄໝ ແລະ ພະລັງງານ, ກະສິກຳອັດສະລິຍະ ຫຼື ໃນຮູບແບບຟາມອັດສະລິຍະ (Smart farm) ເຂົ້າໃນການຜະລິດ ໃຫ້ເໝາະສົມ ກັບແຕ່ລະເຂດແຄ້ວນ ແລະ ການປຸງແຕ່ງພືດ ຕິດພັນກັບການປ່ຽນແປງຂອງສະພາບດິນຟ້າອາກາດ ເພື່ອປະຢັດ ຕົ້ນທຶນ.

ລັດ ອຳນວຍຄວາມສະດວກໃນການນຳເຂົ້າ ຍານພາຫະນະ, ເຄື່ອງມື ແລະ ອຸປະກອນ ທີ່ທັນສະໄໝ ແລະ ເປັນມິດກັບສິ່ງແວດລ້ອມ ເພື່ອນຳໃຊ້ເຂົ້າໃນວຽກງານປຸກຝັງ.

ລັດ ຊຸກຍູ້, ສົ່ງເສີມ ໃຫ້ມີການຜະລິດ, ການນຳໃຊ້ ແລະ ການເຂົ້າເຖິງ ເຄື່ອງມື, ກົນຈັກການຜະລິດ ທີ່ທັນສະໄໝ, ເຕັກໂນໂລຊີ ພະລັງງານທົດແທນທີ່ສະອາດ ເປັນຕົ້ນ ພະລັງງານແສງຕາເວັນ, ພະລັງງານລົມ, ພະລັງງານຄວາມຮ້ອນໃຕ້ດິນ, ພະລັງງານຊີວະມວນ ເຂົ້າໃນການຜະລິດ ແລະ ການປຸງແຕ່ງພືດ ໃຫ້ຫຼາຍຂຶ້ນ.

ເຕັກໂນໂລຊີທັນສະໄໝ ທີ່ນຳໃຊ້ເຂົ້າໃນການຜະລິດ ມີ ດັ່ງນີ້:

1. ເຕັກໂນໂລຊີ ຊີວະພາບດ້ານເຊື້ອພັນ ສຳລັບ ການຄັດເລືອກ ແລະ ການຂະຫຍາຍແນວພັນພືດ, ການວິໄຈ ແລະ ການປະເມີນຜົນ ຈຸລິນຊີທີ່ບໍ່ເປັນປະໂຫຍດຕໍ່ພືດ, ການພັດທະນາຜະລິດຕະພັນຊີວະພາບ ແລະ ວັດຖຸໃໝ່;

2. ເຕັກໂນໂລຊີການນຳໃຊ້ນ້ຳ;

3. ເຕັກໂນໂລຊີການປຸກພືດທີ່ບໍ່ນຳໃຊ້ດິນ;

4. ເຕັກໂນໂລຊີການປຸກພືດໃນ ເຮືອນຮົ່ມ, ເຮືອນຮົ່ມປັບອາກາດ;

5. ເຕັກໂນໂລຊີ ຂໍ້ມູນ ຂ່າວສານ ທີ່ນຳໃຊ້ຄາດຄະເນ ຫຼື ພະຍາກອນ ການເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງ ຈຸລິນຊີທີ່ບໍ່ເປັນປະໂຫຍດ;

6. ເຕັກນິກການປຸກຝັງແບບຖືກຕ້ອງ ທີ່ນຳໃຊ້ເຂົ້າໃນວິທະຍາສາດດິນ ແລະ ທາດອາຫານພືດ;

7. ເຕັກໂນໂລຊີ ຄວບຄຸມລະບົບ ນ້ຳ, ຝຸ່ນ, ຢາປາບສັດຕູພືດ, ສານເລັ່ງການຈະເລີນເຕີບໂຕຂອງພືດ ແລະ ອື່ນໆ ແບບອັດຕະໂນມັດ;

8. ເຕັກໂນໂລຊີ ທີ່ນຳໃຊ້ເຂົ້າໃນການວິເຄາະຄຸນນະພາບຂອງຜົນຜະລິດພືດ ແລະ ສະພາບແວດ ລ້ອມການຜະລິດ ແບບອັດຕະໂນມັດ;

9. ເຕັກໂນໂລຊີອື່ນ ທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກຳນົດ.

ມາດຕາ 62 ສິນເຊື່ອ ແລະ ການເຂົ້າເຖິງແຫຼ່ງທຶນ

ທະນາຄານແຫ່ງ ສປປ ລາວ ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ທະນາຄານທຸລະກິດ ແລະ ສະຖາບັນ ການເງິນທີ່ບໍ່ແມ່ນທະນາຄານ ສ້າງກົນໄກ, ປັບປຸງໂຄງສ້າງດ້ານສິນເຊື່ອ ແລະ ອອກຜະລິດຕະພັນດ້ານການເງິນ ຫຼາຍປະເພດ ໃນການສະໜອງສິນເຊື່ອ, ການຄ້ຳປະກັນສິນເຊື່ອ ແລະ ການເຊົ່າສິນເຊື່ອ ຮັບປະກັນໃຫ້ ຊາວກະສິກອນ, ກຸ່ມ, ສະຫະກອນ, ສະມາຄົມ ຜູ້ຜະລິດກະສິກຳ ແລະ ຜູ້ປະກອບການ ສາມາດເຂົ້າເຖິງ ແຫຼ່ງທຶນໄດ້ຢ່າງ ສະດວກ ແລະ ທົ່ວເຖິງ ເພື່ອນຳໃຊ້ເຂົ້າໃນການປຸກພືດ, ການປຸງແຕ່ງ ແລະ ການສົ່ງອອກ ພືດ ແລະ ຜະລິດຕະພັນພືດ ລວມທັງ ການປ້ອງກັນ ແລະ ຄວບຄຸມການລະບາດຂອງສັດຕູພືດ, ການວິໄຈ ສັດຕູພືດ, ການຢັ້ງຢືນກະສິກຳສະອາດ, ການຢັ້ງຢືນຄຸນນະພາບຜະລິດຕະພັນພືດ, ວຽກງານສຸຂານາໄມ ແລະ ສຸຂານາໄມພືດ ຕາມໂຄງການຕ່າງໆ ໃຫ້ຫຼາຍຂຶ້ນ.

ກະຊວງການເງິນ, ທະນາຄານ ແຫ່ງ ສປປ ລາວ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຄົ້ນຄວ້າຊອກຫາແຫຼ່ງທຶນ ຫຼື ສ້າງເງື່ອນໄຂເອື້ອອຳນວຍ ໃຫ້ແກ່ ຊາວກະສິກອນ, ກຸ່ມ, ສະຫະກອນ, ສະມາຄົມ ຜູ້ຜະລິດກະສິກຳ ແລະ ຜູ້ປະກອບການ ສາມາດເຂົ້າເຖິງແຫຼ່ງທຶນ.

ມາດຕາ 63 ນະໂຍບາຍດ້ານ ພາສີ, ອາກອນ

ລັດ ໃຫ້ນະໂຍບາຍສົ່ງເສີມການປຸກຝັງ ດ້ານພາສີ ແລະ ອາກອນ ດ້ວຍການ ຍົກເວັ້ນ ຫຼື ຫຼຸດຜ່ອນ ພາສີ ແລະ ອາກອນ ການນຳເຂົ້າ ແນວພັນພືດ, ເຄື່ອງມື, ກົນຈັກ, ອຸປະກອນ ທີ່ໃຊ້ເຂົ້າໃນການປຸກຝັງ ທີ່ບໍ່ມີລັກສະນະ ການຄ້າ, ການສົ່ງອອກຜະລິດຕະພັນສິນຄ້າກະສິກຳ ທີ່ໄດ້ຈາກການປຸກຝັງ ລວມທັງການຍົກເວັ້ນ ຄ່າທຳນຽມ ແລະ ຄ່າບໍລິການ ການດຳເນີນທຸລະກິດກະສິກຳສະອາດ ແລະ ກິດຈະກຳອື່ນກ່ຽວກັບວຽກງານປຸກຝັງ ຕາມທີ່

ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ມາດຕາ 64 ການສ້າງ ສູນຄົ້ນຄວ້າທົດລອງ, ສູນພັດທະນາກະສິກຳ ແລະ ສະຖານີບໍລິການເຕັກນິກ

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ສ້າງ ສູນຄົ້ນຄວ້າທົດລອງ, ສູນພັດທະນາກະສິກຳ ແລະ ສະຖານີບໍລິການເຕັກນິກ ເພື່ອເປັນບ່ອນຄົ້ນຄວ້າ, ວິໄຈ, ທົດລອງ, ສາທິດ, ຂະຫຍາຍແນວພັນພືດ, ສັດ, ຝຸ່ນ, ຢາປາບສັດຕູພືດ, ເຕັກໂນໂລຊີຊີວະພາບ, ເຄື່ອງມື ແລະ ກົນຈັກການຜະລິດ ແລະ ນຳໃຊ້ຜົນສຳເລັດ ຂອງການຄົ້ນຄວ້າ, ວິໄຈ, ທົດລອງ ນັ້ນ ອອກເຜີຍແຜ່ໃຫ້ແກ່ ປະຊາຊົນ, ຊາວກະສິກອນ ແລະ ຜູ້ປະກອບການ ໝູນໃຊ້ເຂົ້າໃນການຜະລິດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ສ້າງ ແລະ ພັດທະນາ ສູນຄົ້ນຄວ້າທົດລອງດ້ານກະສິກຳ ກໍສາມາດດຳເນີນການໄດ້ຕາມກົດໝາຍ ບົນພື້ນຖານການເຫັນດີ ຈາກກະຊວງກະສິກຳ ແລະ ສິ່ງແວດລ້ອມ.

ມາດຕາ 65 ການເຂົ້າເຖິງ ແລະ ການຂະຫຍາຍ ຕະຫຼາດ

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບ ຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ, ສະໜັບສະໜຸນ ຕະຫຼາດກະສິກຳ ເພື່ອໃຫ້ສາມາດເຂົ້າເຖິງ ແລະ ຂະຫຍາຍ ຕະຫຼາດ ດ້ວຍການຈັດງານວາງສະແດງສິນຄ້າ ແລະ ການບໍລິການ, ການໂຄສະນາສິນຄ້າ, ການສຶກສາກ່ຽວກັບຕະຫຼາດ, ການແນະນຳຜະລິດຕະພັນ ແລະ ເຂົ້າຮ່ວມງານວາງສະແດງສິນຄ້າ ທັງພາຍໃນ ແລະ ຕ່າງປະເທດ, ການຈັບຄູ່ທຸລະກິດ, ການຮ່ວມລົງທຶນ ແລະ ການເປີດຕະຫຼາດກະສິກຳ ເພື່ອຂະຫຍາຍຕະຫຼາດ.

ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນ ທີ່ກ່ຽວຂ້ອງ ຕ້ອງສົ່ງເສີມໃຫ້ມີການຊົມໃຊ້ຜະລິດຕະພັນ ທີ່ໄດ້ຈາກການຜະລິດກະສິກຳ, ສ້າງເງື່ອນໄຂ ແລະ ໃຫ້ໂອກາດແກ່ ກຸ່ມ, ສະຫະກອນ ທີ່ເປັນຜູ້ສະໜອງ ສິນຄ້າ ແລະ ການບໍລິການ ໃຫ້ແກ່ການຈັດຕັ້ງຂອງຕົນ.

ມາດຕາ 66 ການນຳໃຊ້ ແລະ ການປົກປ້ອງ ຊັບສິນທາງປັນຍາ

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບ ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກໃຫ້ ຊາວກະສິກອນ ຫຼື ຜູ້ປະກອບການ ຫຼື ການຈັດຕັ້ງ ປະດິດສ້າງ, ປະດິດຄິດແຕ່ງ, ສ້າງເສດຖະກິດພຸມປັນຍາ ພ້ອມທັງສົ່ງເສີມ ແລະ ອຳນວຍຄວາມສະດວກ ໃນການຈົດທະບຽນ, ຄຸ້ມຄອງ ແລະ ປົກປ້ອງສິດຕໍ່ຊັບສິນທາງປັນຍາ ໂດຍສະເພາະ ການຢັ້ງຢືນ ແລະ ການຈົດທະບຽນ ພັນພືດໃໝ່.

ມາດຕາ 67 ການສົ່ງເສີມ ຄອບຄົວ, ກຸ່ມ, ສະຫະກອນ ແລະ ສະມາຄົມ ຜະລິດກະສິກຳ

ລັດ ຊຸກຍູ້ ແລະ ສົ່ງເສີມ ຄອບຄົວຕົວແບບຜະລິດກະສິກຳ ດ້ວຍການ ວາງ ແລະ ປະຕິບັດ ນະໂຍບາຍ ຢ່າງເໝາະສົມເພື່ອໃຫ້ຄອບຄົວດັ່ງກ່າວ ມີຄວາມຍືນຍົງ, ສາມາດຖ່າຍທອດຄວາມຮູ້ ແລະ ປະສົບການ ໃຫ້ແກ່ ຊາວກະສິກອນ ແລະ ສັງຄົມ ນຳໄປຈັດຕັ້ງປະຕິບັດ ແລະ ຂະຫຍາຍອອກສູ່ວົງກວ້າງ.

ລັດ ສົ່ງເສີມ, ພັດທະນາກຸ່ມ ໃຫ້ເຂັ້ມແຂງ ດ້ວຍການສະໜັບສະໜຸນ ດ້ານເຕັກນິກ, ວິຊາການ ແລະ ອຳນວຍຄວາມສະດວກ ໃຫ້ແກ່ກຸ່ມ ເພື່ອກ້າວເປັນສະຫະກອນ.

ລັດ ຊຸກຍູ້ ແລະ ສົ່ງເສີມ ວຽກງານສະຫະກອນກະສິກຳ ດ້ວຍການ ວາງນະໂຍບາຍ, ສ້າງ ກົນໄກ, ເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ແກ່ສະຫະກອນ ມີການເຕີບໃຫຍ່ຂະຫຍາຍຕົວ, ເຂັ້ມແຂງ ຕາມທິດສີຂຽວ, ສະອາດ ແລະ ຍືນຍົງ, ສ້າງລາຍຮັບ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ໃຫ້ດີຂຶ້ນ.

ລັດ ຊຸກຍູ້ ແລະ ສົ່ງເສີມ ໃຫ້ ຊາວກະສິກອນ, ຜູ້ປະກອບການ ສ້າງຕັ້ງສະມາຄົມຜະລິດ, ປຸງແຕ່ງ ແລະ ບໍລິການດ້ານກະສິກຳ ເພື່ອຊ່ວຍເຫຼືອສັງຄົມ, ແກ້ໄຂຄວາມທຸກຍາກ, ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ ຂອງຊາດ ແລະ ຂອງທ້ອງຖິ່ນ.

ມາດຕາ 68 ການສະໜອງ ຂໍ້ມູນ ຂ່າວສານ

ລັດ ສະໜອງ ຂໍ້ມູນ ຂ່າວສານ ກ່ຽວກັບ ການປູກຝັງ ເປັນຕົ້ນ ເຕັກນິກການຜະລິດ, ອຸຕຸນິຍົມ, ອຸທົກ ກະສາດ, ຕົ້ນທຶນການຜະລິດ, ການເໜັງຕີງຂອງລາຄາ ໃນທ້ອງຕະຫຼາດ, ນະໂຍບາຍ, ທ່າແຮງ ຂອງການປູກຝັງ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການ ສ້າງ, ພັດທະນາ ແລະ ຄຸ້ມຄອງ ລະບົບ ຂໍ້ມູນ ຂ່າວສານ ກ່ຽວກັບການປູກຝັງ ພ້ອມທັງສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ນຳໃຊ້ ແລະ ເຜີຍແຜ່ ຂໍ້ມູນ ຂ່າວສານ ດັ່ງກ່າວ ໃຫ້ປະຊາຊົນ, ຊາວກະສິກອນ ແລະ ຜູ້ປະກອບການຮັບຮູ້ຢ່າງຖືກຕ້ອງ ແລະ ທັນເວລາ.

ມາດຕາ 69 ການສົ່ງເສີມຄັງແຮແນວພັນພືດ

ລັດ ຊຸກຍູ້, ສົ່ງເສີມ ໃຫ້ມີການສ້າງຄັງແຮແນວພັນພືດ ເພື່ອຕອບສະໜອງຄວາມຕ້ອງການຂອງ ຊາວກະສິກອນ ແລະ ຜູ້ປະກອບການ ໃນເວລາຈຳເປັນ ດ້ວຍການນຳເອົາຜົນຜະລິດພືດຂອງຕົນ ເປັນຫຼັກຊັບ ຄ້ຳປະກັນ ເພື່ອກູ້ຢືມເງິນ ຈາກທະນາຄານ ຫຼື ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ.

ຊາວກະສິກອນ ແລະ ຜູ້ປະກອບການ ມີສິດນຳເອົາຜົນຜະລິດພືດ ທີ່ນຳໄປຄ້ຳປະກັນນັ້ນ ອອກຈຳໜ່າຍ ໃນເວລາຜົນຜະລິດພືດມີລາຄາສູງ. ນອກຈາກນີ້ ຊາວກະສິກອນ ແລະ ຜູ້ປະກອບການ ຍັງສາມາດກູ້ຢືມ ເມັດພັນພືດຈາກຄັງແຮແນວພັນພືດ ໃນເວລາຈຳເປັນ.

ມາດຕາ 70 ການຜະລິດແບບມີສັນຍາ

ລັດ ຊຸກຍູ້ ແລະ ສົ່ງເສີມ ການຜະລິດແບບມີສັນຍາ ດ້ວຍການວາງນະໂຍບາຍ, ສ້າງ ກົນໄກ, ເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການ ຜະລິດ, ປຸງແຕ່ງ ແລະ ບໍລິການ ດ້ານການປູກຝັງ ໃຫ້ມີການເຕີບໃຫຍ່ ຂະຫຍາຍຕົວ, ເຂັ້ມແຂງ ເພື່ອສ້າງລາຍຮັບ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຕະຫຼາດ ແລະ ຍົກລະດັບ ຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າໃຫ້ດີຂຶ້ນ.

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ, ລວມໝູ່ ແລະ ການຈັດຕັ້ງ ປະກອບສ່ວນເຂົ້າໃນ ການສ້າງສຳພັນເສດຖະກິດ ລະຫວ່າງ ພາກລັດ, ກຸ່ມ, ສະຫະກອນ, ຜູ້ປະກອບການ ແລະ ຊາວກະສິກອນ ກ່ຽວກັບການຜະລິດແບບມີສັນຍາໃຫ້ ເຂັ້ມແຂງ ແລະ ຍືນຍົງ.

ມາດຕາ 71 ການຂຶ້ນທະບຽນສອນປູກ

ການຂຶ້ນທະບຽນສອນປູກ ແມ່ນ ການກຳນົດລະຫັດປະຈຳສອນປູກພືດ ທີ່ນຳໃຊ້ ສຳລັບ ການຕິດຕາມ ແລະ ຄວບຄຸມການຜະລິດ ແລະ ຄຸນນະພາບຂອງຜະລິດຕະພັນ, ການກວດກາຄືນແຫຼ່ງຂອງຜະລິດຕະພັນພືດ.

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ມີລະຫັດປະຈຳສອນປູກ ຊຶ່ງຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ ໃຫ້ຄຳແນະນຳ ແລະ ພັດທະນາ ກ່ຽວກັບລະບົບ ການຂຶ້ນທະບຽນສອນປູກພືດ ໃນຂອບເຂດທົ່ວປະເທດ.

ສຳລັບ ການຂຶ້ນທະບຽນສອນປູກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ພາກທີ IV
ທຸລະກິດກ່ຽວກັບການປຸກຝັງ

ມາດຕາ 72 ປະເພດທຸລະກິດກ່ຽວກັບການປຸກຝັງ

ປະເພດທຸລະກິດກ່ຽວກັບການປຸກຝັງ ມີ ດັ່ງນີ້:

1. ການປຸກພືດເປັນສິນຄ້າ;
2. ການປຸງແຕ່ງ ພືດ ແລະ ຜະລິດຕະພັນພືດ;
3. ການສ້າງ ສາງ, ລານຕາກ, ໂຮງອົບ, ຫ້ອງເຢັນ ກ່ຽວກັບພືດ;
4. ການສ້າງໂຮງງານຜະລິດ ຝຸ່ນ ແລະ ຢາປາບສັດຕູພືດ;
5. ທຸລະກິດກ່ຽວກັບປັດໄຈການຜະລິດ;
6. ທຸລະກິດກ່ຽວກັບກະສິກຳສະອາດ;
7. ການວິໄຈ ຄຸນນະພາບຂອງຜົນຜະລິດພືດ;
8. ທີ່ປຶກສາດ້ານການປຸກຝັງ;
9. ທຸລະກິດທ່ອງທ່ຽວກະສິກຳ;
10. ທຸລະກິດອື່ນ ກ່ຽວກັບການປຸກຝັງ.

ສຳລັບ ລາຍລະອຽດຂອງທຸລະກິດກ່ຽວກັບການປຸກຝັງ ແຕ່ລະປະເພດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 73 ການດຳເນີນທຸລະກິດກ່ຽວກັບການປຸກຝັງ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບການປຸກຝັງ ໃຫ້ແຈ້ງຂຶ້ນທະບຽນວິສາຫະກິດນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດ ນຳຂະແໜງການກະສິກຳ ແລະ ສິ່ງແວດລ້ອມ.

ໃນກໍລະນີທຸລະກິດກ່ຽວກັບການປຸກຝັງ ຫາກຢູ່ໃນບັນຊີກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

ມາດຕາ 74 ເງື່ອນໄຂການດຳເນີນທຸລະກິດ

ການດຳເນີນທຸລະກິດກ່ຽວກັບການປຸກຝັງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ;
2. ທຶນ, ສະຖານທີ່ປະກອບການຜະລິດ, ສຳນັກງານ ຫຼື ສິ່ງປຸກສ້າງ, ອັດຕາປະກອນ ແລະ ພາຫະນະຮັບໃຊ້ທີ່ຖືກຕ້ອງ ຕາມມາດຕະຖານເຕັກນິກ;
3. ນັກວິຊາການສະເພາະດ້ານ ແລະ ມີປະສົບການ ກ່ຽວກັບທຸລະກິດຂອງຕົນ;
4. ບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດຳເນີນທຸລະກິດ;
5. ເງື່ອນໄຂອື່ນ ຕາມແຕ່ລະປະເພດທຸລະກິດ.

ມາດຕາ 75 ເອກະສານປະກອບ ການຂໍອະນຸຍາດດຳເນີນທຸລະກິດ

ເອກະສານປະກອບ ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບການປຸກຝັງ ມີ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດ ຕາມແບບພິມທີ່ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກຳນົດ;
2. ສຳເນົາ ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ;

3. ບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດຳເນີນທຸລະກິດ;

4. ເອກະສານອື່ນ ຕາມແຕ່ລະປະເພດທຸລະກິດ.

ມາດຕາ 76 ການພິຈາລະນາ ອອກໃບອະນຸຍາດດຳເນີນທຸລະກິດ

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການປຸກຝັງ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ໃນກໍລະນີບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດໄດ້ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນ ໃຫ້ຜູ້ຮ້ອງຂໍພາຍໃນກຳນົດເວລາດັ່ງກ່າວ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດຂັ້ນຕອນ ໃນການອະນຸຍາດດຳເນີນທຸລະກິດ ກ່ຽວກັບການປຸກຝັງ.

ມາດຕາ 77 ໃບອະນຸຍາດດຳເນີນທຸລະກິດ

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບການປຸກຝັງ ມີອາຍຸການນຳໃຊ້ ສອງປີ ແລະ ສາມາດຕໍ່ໄດ້. ໃບອະນຸຍາດດຳເນີນທຸລະກິດກ່ຽວກັບການປຸກຝັງ ບໍ່ໃຫ້ໂອນ ຫຼື ມອບໃຫ້ບຸກຄົນອື່ນນຳໃຊ້.

ມາດຕາ 78 ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ

ຜູ້ດຳເນີນທຸລະກິດກ່ຽວກັບການປຸກຝັງ ມີ ສິດ ແລະ ພັນທະ ດັ່ງນີ້:

1. ໄດ້ຮັບການປົກປ້ອງຕາມກົດໝາຍ;

2. ເປັນເຈົ້າກຳມະສິດຕໍ່ຊັບສິນ ແລະ ຜົນໄດ້ຮັບຈາກການດຳເນີນທຸລະກິດ;

3. ນຳໃຊ້ແຮງງານດີ ແລະ ສົ່ງເສີມ, ອຳນວຍຄວາມສະດວກ ໃຫ້ຜູ້ອອກແຮງງານ ໄດ້ຮັບການຝຶກອົບຮົມ, ມີຄວາມຮູ້ ກ່ຽວກັບເຕັກນິກການປຸກຝັງ, ການອະນາໄມສ່ວນບຸກຄົນ, ຄວາມປອດໄພ;

4. ໄດ້ຮັບການຊ່ວຍເຫຼືອ ແນະນຳທາງດ້ານ ເຕັກໂນໂລຊີ ແລະ ວິຊາການ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ;

5. ໂອນ ກິດຈະການຂອງຕົນໃຫ້ບຸກຄົນອື່ນ ຫຼື ສືບທອດກິດຈະການຂອງບຸກຄົນອື່ນ ຕາມກົດໝາຍ;

6. ໄດ້ຮັບນະໂຍບາຍທີ່ລັດວາງອອກໃນແຕ່ລະໄລຍະ;

7. ນຳໃຊ້ທີ່ດິນກະສິກຳເພື່ອການປຸກຝັງ ໃຫ້ຖືກຕ້ອງຕາມກົດໝາຍ;

8. ບໍ່ສ້າງ ຄວາມເສຍຫາຍ ແລະ ຜົນກະທົບ ຕໍ່ການຜະລິດຂອງຜູ້ອື່ນ ຫຼື ທຳມະຊາດ, ສິ່ງແວດລ້ອມ ແລະ ສັງຄົມ;

9. ລາຍງານການແພ່ລະບາດຂອງສັດຕູພືດ;

10. ປະຕິບັດ ສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບ, ມາດຕະການຄວາມປອດໄພທາງດ້ານວິຊາການ, ພັນທະ ພາສີ, ອາກອນ ແລະ ພັນທະອື່ນ ກ່ຽວກັບກິດຈະການດ້ານການປຸກຝັງ;

11. ໃຫ້ຄວາມຮ່ວມມືກັບ ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານປຸກຝັງ ໃນການຕິດຕາມ ກວດກາ ການດຳເນີນກິດຈະການ;

12. ລາຍງານຜົນການດຳເນີນທຸລະກິດ ຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນແຕ່ລະໄລຍະ;

13. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 79 ການໂຈະການດຳເນີນທຸລະກິດ

ການດຳເນີນທຸລະກິດກ່ຽວກັບການປຸກຝັງ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ມີການສະເໜີຂອງຜູ້ດຳເນີນທຸລະກິດ;
2. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
3. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ.

ໃນກໍລະນີຜູ້ດຳເນີນທຸລະກິດ ບໍ່ແກ້ໄຂ ແລະ ປັບປຸງ ຕາມການແຈ້ງເຕືອນແລ້ວ ໃຫ້ຂະແໜງການ ກະສິກຳ ແລະ ສິ່ງແວດລ້ອມ ສັ່ງໂຈະການດຳເນີນທຸລະກິດ.

ມາດຕາ 80 ການຖອນໃບອະນຸຍາດດຳເນີນທຸລະກິດ

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບການປຸກຝັງ ຈະຖືກຖອນໃນກໍລະນີຜູ້ດຳເນີນທຸລະກິດ ບໍ່ປະຕິບັດ ຕາມຄຳສັ່ງໂຈະ. ພາຍຫຼັງໄດ້ຖອນໃບອະນຸຍາດດຳເນີນທຸລະກິດແລ້ວ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕ້ອງແຈ້ງໃຫ້ ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນຖອນໃບອະນຸຍາດດຳເນີນທຸລະກິດ ເປັນຕົ້ນໄປ.

ພາກທີ V
ຂໍ້ຫ້າມ

ມາດຕາ 81 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຈັບຈອງ, ບຸກເບີກ, ເອົາທີ່ດິນປຸກຝັງ ໄປຈັດສັນເປັນທີ່ດິນປຸກສ້າງ ຫຼື ທີ່ດິນປະເພດອື່ນ ແລະ ນຳໃຊ້ ໂດຍບໍ່ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ;
2. ປ່ອຍທີ່ດິນນາເປັນເຮົ້ອ;
3. ປຸກ ໄມ້ໃຫ້ໝາກ ຫຼື ພືດອາຍຸຍາວ, ໄມ້ອຸດສາຫະກຳ ໃສ່ທີ່ດິນນາໂດຍບໍ່ໄດ້ຮັບອະນຸຍາດ;
4. ນຳເຂົ້າ ຫຼື ນຳໃຊ້ ປັດໄຈການຜະລິດ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
5. ຈູດເຟືອງ ແລະ ສິ່ງເສດເຫຼືອ, ປ່ອຍນ້ຳເສຍ, ສິ່ງເປິະເປື້ອນ, ຍົກຄູກັນນ້ຳ ທີ່ມີຜົນກະທົບທາງລົບ ຕໍ່ທີ່ດິນກະສິກຳ;
6. ລະເມີດສັນຍາ ຫຼື ຊື້ ຂາຍສິດນຳໃຊ້ທີ່ດິນກະສິກຳ ທີ່ໄດ້ເຊົ່າ ແລະ ສຳປະທານແລ້ວ;
7. ຍ້າຍ, ປ່ຽນແປງ ແລະ ທຳລາຍ ຫຼັກໝາຍເຂດ, ປ້າຍແຜນທີ່ ທີ່ດິນກະສິກຳ;
8. ຜະລິດ, ນຳເຂົ້າ, ຈຳໜ່າຍ, ນຳໃຊ້ ແລະ ຖິ້ມຊະຊາຍ ປັດໄຈການຜະລິດທີ່ເກືອດຫ້າມ, ບໍ່ມີ ຄຸນນະພາບ, ເສື່ອມຄຸນນະພາບ ທີ່ເປັນອັນຕະລາຍຕໍ່ສຸຂະພາບຂອງ ຄົນ, ສັດ ແລະ ສິ່ງແວດລ້ອມ;
9. ເອົາທີ່ດິນປຸກຝັງໃຫ້ເຊົ່າເພື່ອດຳເນີນທຸລະກິດ ໂດຍບໍ່ໄດ້ຮັບການຈົດທະບຽນການເຄື່ອນໄຫວສິດ ນຳໃຊ້ທີ່ດິນ;
10. ໂຄສະນາ ເຜີຍແຜ່ ຫຼື ສະໜອງຂໍ້ມູນ ກ່ຽວກັບປັດໄຈການຜະລິດ ໃນທາງທີ່ບິດເບືອນ;
11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

ມາດຕາ 82 ຂໍ້ຫ້າມ ສຳລັບຜູ້ດຳເນີນທຸລະກິດ

ຫ້າມ ຜູ້ດຳເນີນທຸລະກິດ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ຕາມການອະນຸຍາດ;
2. ໂອນ ຫຼື ໃຫ້ເຊົ່າ ໃບອະນຸຍາດດຳເນີນທຸລະກິດ;

3. ບັງຄັບ, ນາບຂູ່, ກີດໜ່ວງ ຖ່ວງດຶງ, ຂັດຂວາງ ຫຼື ໃຊ້ວາຈາທີ່ບໍ່ເໝາະສົມ ຕໍ່ ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

4. ໃຫ້ສິນບົນ ແກ່ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຫຼື ຮ່ວມກັນສໍ້ໂກງ;

5. ຜະລິດ, ນຳເຂົ້າ, ຈຳໜ່າຍ ແລະ ນຳໃຊ້ ພືດ, ຜະລິດຕະພັນພືດ ແລະ ປັດໄຈການຜະລິດ ທີ່ມີການປອມແປງ;

6. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

ມາດຕາ 83 ຂໍ້ຫ້າມ ສຳລັບ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ ຂອງຕົນ;

2. ທວງເອົາ, ຂໍເອົາ, ຮັບ ສິນບົນ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

3. ຢັ້ງຢືນ ຫຼື ອອກເອກະສານ ກ່ຽວກັບການປູກຝັງ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

4. ກີດໜ່ວງ, ຖ່ວງດຶງ, ປອມແປງ ເອກະສານ ຫຼື ນຳໃຊ້ເອກະສານປອມ;

5. ໃຊ້ສິດ ຫຼື ໜ້າທີ່ ເກີນຂອບເຂດ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດ ຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນ ແລະ ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ;

6. ເປັນ ນາຍໜ້າ, ທີ່ປຶກສາໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປູກຝັງ;

7. ເປີດເຜີຍຄວາມລັບຂອງ ລັດ ຫຼື ທາງລັດຖະການ, ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

8. ປິດເບືອນຄວາມຈິງ, ປິດບັງ, ເຊື່ອງອຳ ແລະ ປົກປ້ອງ ຫຼື ໃຫ້ຄວາມຮ່ວມມືກັບຜູ້ກະທຳຜິດ;

9. ທຳລາຍຫຼັກຖານ, ເອກະສານ ກ່ຽວກັບການປູກຝັງ, ຍ້າຍ, ປ່ຽນແປງ ຫຼື ທຳລາຍ ຫຼັກໝາຍ ເຂດທີ່ດິນກະສິກຳ;

10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

ພາກທີ VI

ການຄຸ້ມຄອງ ແລະ ການກວດກາ ວຽກງານປູກຝັງ

ໝວດທີ 1

ການຄຸ້ມຄອງວຽກງານປູກຝັງ

ມາດຕາ 84 ອົງການຄຸ້ມຄອງວຽກງານປູກຝັງ

ລັດຖະບານ ຄຸ້ມຄອງວຽກງານປູກຝັງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານປູກຝັງ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ສິ່ງແວດລ້ອມ;

2. ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງ, ແຂວງ;

3. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ;

4. ໜ່ວຍງານເສດຖະກິດ-ການເງິນ ຕາແສງ.

ມາດຕາ 85 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ

ໃນການຄຸ້ມຄອງວຽກງານປຸກຝັງ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານ ປຸກຝັງ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານ ປຸກຝັງ ເປັນ ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປຸກຝັງ;

4. ອອກ, ໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບວຽກງານປຸກຝັງ;

5. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ແລະ ໃບທະບຽນວິຊາການດ້ານການປຸກຝັງ;

6. ອະນຸຍາດ ນຳເຂົ້າ, ສົ່ງອອກ, ສົ່ງອອກຕໍ່ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ, ແນວພັນພືດ, ຝຸ່ນ ແລະ ຢາປາບສັດຕູພືດ;

7. ປະສານສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການນຳເຂົ້າ ເຄື່ອງມືການຜະລິດ ແລະ ກົນຈັກການຜະລິດ;

8. ຄົ້ນຄວ້າ ແລະ ພິຈາລະນາ ການຢັ້ງຢືນ ຄວາມສະອາດ, ຄວາມປອດໄພ ຈາກສັດຕູພືດ, ສານພິດ ຕົກຄ້າງ, ໂລຫະໜັກ, ຄຸນນະພາບ ຂອງພືດ, ຜະລິດຕະພັນພືດ ແລະ ປັດໄຈການຜະລິດ;

9. ຄົ້ນຄວ້າວິທະຍາສາດການປຸກຝັງ, ສ້າງຕາໜ່າງສູນຄົ້ນຄວ້າ, ສູນບໍລິການເຕັກນິກການປຸກຝັງ ແລະ ໜ່ວຍສົ່ງເສີມການປຸກຝັງ ໃນຂອບເຂດທົ່ວປະເທດ;

10. ສ້າງແຜນທີ່ຈັດສັນທີ່ດິນກະສິກຳ ແລະ ແຜນການນຳໃຊ້ທີ່ດິນກະສິກຳສຳລັບການປຸກຝັງ;

11. ສຳຫຼວດທ່າແຮງທາງດ້ານຊັບພະຍາກອນທຳມະຊາດ ແລະ ເຂດຈຸດສຸມການປຸກຝັງ;

12. ຕິດຕາມ ການດຳເນີນກິດຈະການການປຸກຝັງ ຕາມກົດໝາຍ, ລະບຽບການ, ມາດຕະຖານເຕັກນິກ ເພື່ອໃຫ້ການຜະລິດມີປະສິດທິຜົນ;

13. ສ້າງ, ບຳລຸງ ແລະ ຍົກລະດັບ ບຸກຄະລາກອນດ້ານການປຸກຝັງ;

14. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບ ວຽກງານປຸກຝັງ;

15. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປຸກຝັງ;

16. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປຸກຝັງ;

17. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປຸກຝັງ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

18. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 86 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງ, ແຂວງ

ໃນການຄຸ້ມຄອງວຽກງານປຸກຝັງ ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານ ປຸກຝັງ ເປັນ ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ ແລະ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານປຸກຝັງ ໃຫ້ປະຊາຊົນ ແລະ ທຸກພາກສ່ວນ ເຂົ້າໃຈ ແລະ ເຂົ້າຮ່ວມ ໃນການຈັດຕັ້ງປະຕິບັດ;

3. ຄົ້ນຄວ້າ ແລະ ສະເໜີ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ພິຈາລະນາ ອອກ ຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບວຽກງານປຸກຝັງ;

4. ຄົ້ນຄວ້າ ແລະ ພິຈາລະນາ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການ ປຸກຝັງ;

5. ສ້າງແຜນການນຳໃຊ້ທີ່ດິນກະສິກຳສຳລັບການປຸກຝັງ;

6. ຂຶ້ນທະບຽນສອນປຸກ;

7. ສ້າງ, ບຳລຸງ ຍົກລະດັບ ບຸກຄະລາກອນດ້ານການປຸກຝັງ, ຊາວກະສິກອນ ແລະ ຜູ້ປະກອບການ;

8. ສຳຫຼວດທ່າແຮງທາງດ້ານຊັບພະຍາກອນທຳມະຊາດ ແລະ ຈຸດສຸມການປຸກຝັງ ລວມທັງການຈັດ ສັນທີ່ດິນກະສິກຳສຳລັບການປຸກຝັງ;

9. ຕິດຕາມ ການດຳເນີນກິດຈະການການປຸກຝັງ ຕາມກົດໝາຍ, ລະບຽບການ, ມາດຕະຖານເຕັກນິກ ເພື່ອໃຫ້ການຜະລິດມີປະສິດທິຜົນ;

10. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບ ວຽກງານປຸກຝັງ;

11. ປະສານສົມທົບກັບ ພະແນກການ, ອົງການລັດທຽບເທົ່າພະແນກ ຂັ້ນແຂວງ, ຄະນະກຳມະການ ປົກຄອງຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປຸກຝັງ;

12. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານປຸກຝັງ ຕາມການມອບໝາຍ;

13. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປຸກຝັງ ຕໍ່ ກະຊວງກະສິກຳ ແລະ ສິ່ງແວດ ລ້ອມ ແລະ ຄະນະກຳມະການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 87 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ

ໃນການຄຸ້ມຄອງວຽກງານປຸກຝັງ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປຸກຝັງ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປຸກຝັງ ໃຫ້ປະຊາຊົນ, ທຸກພາກສ່ວນ ເຂົ້າໃຈ ແລະ ເຂົ້າຮ່ວມ ໃນການຈັດຕັ້ງ ປະຕິບັດ;

3. ສຳຫຼວດທ່າແຮງ ທາງດ້ານຊັບພະຍາກອນທຳມະຊາດ ແລະ ເຂດຈຸດສຸມການປຸກຝັງ ລວມທັງ ການຈັດສັນທີ່ດິນກະສິກຳສຳລັບການປຸກຝັງ;

4. ຝຶກອົບຮົມ ແລະ ແນະນຳເຕັກນິກ ກະເສດສຸມໃນການປຸກຝັງ ໃຫ້ແກ່ປະຊາຊົນ, ຊາວກະສິກອນ ແລະ ຜູ້ປະກອບການ;

5. ຕິດຕາມ ການດຳເນີນທຸລະກິດ ກ່ຽວກັບ ການປຸກຝັງ;

6. ຕິດຕາມ ການດຳເນີນກິດຈະການການປຸກຝັງ ຕາມກົດໝາຍ, ລະບຽບການ, ມາດຕະຖານເຕັກນິກ ເພື່ອໃຫ້ການຜະລິດມີປະສິດທິຜົນ;

7. ເຂົ້າຮ່ວມ ໃນການພິຈາລະນາ ການຂຶ້ນທະບຽນສອນປຸກ;

8. ມີຄຳເຫັນຕໍ່ການຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບການປຸກຝັງ;

9. ສະເໜີ ໂຈະການດຳເນີນທຸລະກິດ ຫຼື ຖອນໃບອະນຸຍາດການດຳເນີນທຸລະກິດ ກ່ຽວກັບການປຸກຝັງ ຕໍ່ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ;

10. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບ ວຽກງານປຸກຝັງ;

11. ປະສານສົມທົບກັບ ຫ້ອງການ, ອົງການລັດທຽບເທົ່າຫ້ອງການ ຂັ້ນເມືອງ, ຄະນະກຳມະການ ປົກຄອງຕາແສງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປຸກຝັງ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປຸກຝັງ ຕໍ່ ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ ແລະ ຄະນະກຳມະການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

13. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 88 ສິດ ແລະ ໜ້າທີ່ ຂອງໜ່ວຍງານເສດຖະກິດ-ການເງິນ ຕາແສງ

ໃນການຄຸ້ມຄອງວຽກງານປຸກຝັງ ໜ່ວຍງານເສດຖະກິດ-ການເງິນ ຕາແສງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະສານງານກັບ ຫ້ອງການບ້ານ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເພື່ອເຜີຍແຜ່ ລະບຽບການກ່ຽວກັບວຽກງານປຸກຝັງ;

2. ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ເພື່ອຍົກລະດັບທາງດ້ານວິຊາການປຸກຝັງ ເປັນແຕ່ ລະໄລຍະ;

3. ບັນທຶກຂໍ້ມູນການປຸກຝັງ ຊ່ວຍຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ຈັດສັນ ສະຖານທີ່ປຸກຝັງ ໃຫ້ປະຊາຊົນ ແລະ ຊາວກະສິກອນ;

4. ເຂົ້າຮ່ວມໃນການໄກ່ເກ່ຍຂໍ້ຂັດແຍ່ງ ກ່ຽວກັບວຽກງານປຸກຝັງ;

5. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປຸກຝັງ ຕໍ່ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ແລະ ຄະນະກຳມະການປົກຄອງ ຕາແສງ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 89 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານ ສົມທົບກັບ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນຂອງຕົນ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ວຽກງານປຸກຝັງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງຕົນ.

ໝວດທີ 2
ການກວດກາວຽກງານປຸກຝັງ

ມາດຕາ 90 ອົງການກວດກາວຽກງານປຸກຝັງ

ອົງການກວດກາວຽກງານປຸກຝັງ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານປຸກຝັງ ຕາມທີ່ ໄດ້ກຳນົດໄວ້ໃນມາດຕາ 84 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການ ກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການ ຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

ມາດຕາ 91 ເນື້ອໃນການກວດກາວຽກງານປຸກຝັງ

ການກວດກາວຽກງານປຸກຝັງ ມີເນື້ອໃນ ດັ່ງນີ້:

1. ການສ້າງ ແລະ ປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປຸກຝັງ;

2. ການປະຕິບັດໜ້າທີ່ຂອງ ການຈັດຕັ້ງ, ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານປຸກຝັງ;

3. ການດຳເນີນທຸລະກິດກ່ຽວກັບການປຸກຝັງ;

4. ການຈັດສັນ ແລະ ການນຳໃຊ້ ທີ່ດິນກະສິກຳສຳລັບການປຸກຝັງ;

5. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

ມາດຕາ 92 ຮູບການການກວດກາວຽກງານປຸກຝັງ

ການກວດກາວຽກງານປຸກຝັງ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນຕາມ ພາລະບົດບາດ, ສິດ ແລະ ໜ້າທີ່ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າ ມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

ມາດຕາ 93 ເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານປຸກຝັງ

ເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານປຸກຝັງ ແມ່ນ ຜູ້ດຽວກັນກັບ ເຈົ້າໜ້າທີ່ ກັກກັນພືດ, ກວດກາຢາ ປາບສັດຕູພືດ ແລະ ແນວພັນພືດ.

ສຳລັບ ການແຕ່ງຕັ້ງ, ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ ກັກກັນພືດ, ກວດກາຢາປາບສັດຕູພືດ ແລະ ແນວພັນພືດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ພາກທີ VII

ອັນປຸກຝັງແຫ່ງຊາດ, ການໝາຍ ແລະ ຕາປະທັບ

ມາດຕາ 94 ອັນປຸກຝັງແຫ່ງຊາດ

ລັດ ກຳນົດເອົາ ວັນທີ 15 ພຶດສະພາ ເປັນວັນປຸກຝັງແຫ່ງຊາດ ແລະ ຖືເອົາວັນດັ່ງກ່າວຂອງທຸກປີ ເພື່ອຈັດກິດຈະກຳ ສະເຫຼີມສະຫຼອງ ແລະ ນຳພາ ຊີ້ນຳ, ຊຸກຍູ້, ສົ່ງເສີມ ການປຸກຝັງ ຂອງຊາວກະສິກອນ ແລະ ຜູ້ປະກອບການ ໃຫ້ເປັນຂະບວນຟົດຟື້ນ.

ມາດຕາ 95 ການໝາຍ ແລະ ຕາປະທັບ

ເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານປຸກຝັງ ມີ ການໝາຍ ເພື່ອນຳໃຊ້ໃນການເຄື່ອນໄຫວວຽກງານທາງ ລັດຖະການ ໂດຍກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດ.

ເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານປຸກຝັງ ນຳໃຊ້ຕາປະທັບ ຂອງຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ໃນການເຄື່ອນໄຫວວຽກງານລັດຖະການ.

ພາກທີ VIII

ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 96 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການຄຸ້ມຄອງ, ການສົ່ງເສີມ, ການພັດທະນາ ວຽກງານປຸກຝັງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 97 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

ພາກທີ IX

ບົດບັນຍັດສຸດທ້າຍ

ມາດຕາ 98 ງົບປະມານ

ງົບປະມານທີ່ນຳໃຊ້ເຂົ້າໃນວຽກງານປຸກຝັງ ແມ່ນ ງົບປະມານຂອງລັດ, ການຊ່ວຍເຫຼືອ ຫຼື ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ, ຄ່າປັບໃໝ ຍ້ອນການລະເມີດ ກົດໝາຍ, ລະບຽບການ ກ່ຽວກັບການປຸກຝັງ ແລະ ລາຍຮັບອື່ນທີ່ຖືກຕ້ອງຕາມກົດໝາຍ.

ມາດຕາ 99 ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍ ສະບັບນີ້.

ມາດຕາ 100 ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ ວັນທີ 1 ກັນຍາ 2025 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດ ທາງລັດຖະການ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ